# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ....................................01 - 08

**II.** ການເຄື່ອນໄຫວຂອງການນຳການຂັ້ນສູງຂອງພັກ ປະຊາຊົນ ປະຕິວັດລາວ................................09 - 10

**III.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ...............................................11 - 13


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນ ພຶດສະພາ 2025


ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

**Tel : 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນພາຍໃນ ສປປ ລາວ.

#### 1) ກອງປະຊຸມຄົບຄະນະ ຄັ້ງທີ 10 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI

ກອງປະຊຸມຄົບຄະນະ ຄັ້ງທີ 10 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໄດ້ຈັດຂຶ້ນໃນວັນທີ 19-23 ພຶດສະພາ 2025 ໂດຍການເປັນປະທານຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ.

ກອງປະຊຸມໃນຄັ້ງນີ້ ໄດ້ພ້ອມກັນພິຈາລະນາ, ຄົ້ນຄວ້າ, ປຶກສາຫາລື ແລະ ຕົກລົງວຽກງານສຳຄັນ ໃນຫຼາຍດ້ານ ເປັນຕົ້ນ ຕີລາຄາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນເງິນຕາ 06 ເດືອນຕົ້ນປີ 2025 ແລະ ທິດທາງແຜນການ 06 ເດືອນທ້າຍປີ 2025 ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ຄົ້ນຄວ້າມີຄຳເຫັນຊີ້ນຳ ຕໍ່ຮ່າງເອກະສານ ຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ເຊິ່ງປະກອບມີ 05 ເອກະສານ ຄື: ຮ່າງໂຄງການການເມືອງຂອງພັກ, ຮ່າງລາຍງານການເມືອງ, ຮ່າງແຜນພັດທະນາເສດຖະກິດ-ສັງຄົມ, ກົດລະບຽບຂອງພັກ ສະບັບປັບປຸງ ແລະ ຮ່າງບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກ ສະໄໝທີ XI. ພ້ອມນີ້, ຍັງໄດ້ຕີລາຄາກ່ຽວກັບຜົນດຳເນີນ ກອງປະຊຸມໃຫຍ່ອົງຄະນະພັກເມືອງ-ນະຄອນ ແລະ ຮາກຖານພັກ ອ້ອມຂ້າງແຂວງ-ນະຄອນຫຼວງ ແລະ ຮາກຖານພັກອ້ອມຂ້າງກະຊວງ-ອົງການ, ປຶກສາຫາລື ແລະ ໃຫ້ທິດຊີ້ນຳໃນການດຳເນີນກອງປະຊຸມໃຫຍ່ ຂອງອົງຄະນະພັກແຂວງ, ນະຄອນຫຼວງວຽງຈັນ, ກະຊວງ ແລະ ອົງການ. ໃນໂອກາດດັ່ງກ່າວ, ສະຫາຍ ທອງລຸນ ສີສຸລິດ ໄດ້ມີຄຳເຫັນ ໂດຍເນັ້ນໃຫ້ ບັນດາສະຫາຍກຳມະການສູນກາງພັກ ຈົ່ງຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ, ສຸມສະຕິປັນຍາ ເຂົ້າໃນການຄົ້ນຄວ້າເອກະສານຕ່າງໆ ໃຫ້ລະອຽດຖີ່ຖ້ວນ, ມີການສັງເກດຕີລາຄາ, ໄຈ້ແຍກບັນຫາໃຫ້ເລິກເຊິ່ງ, ຮອບຄອບ, ພາວະວິໄສ, ສ້າງການຫັນປ່ຽນທີ່ແຂງແຮງ, ກ້າຄິດ, ກ້າສະເໜີ, ໃຫ້ທິດຊີ້ນຳຕໍ່ບັນຫາສຳຄັນຕ່າງໆ, ເຮັດໃຫ້ກອງປະຊຸມສູນກາງຄັ້ງນີ້, ບັນລຸໄດ້ຕາມລະດັບຄາດໝາຍທີ່ວາງອອກ ຕອບສະໜອງໄດ້ ຕາມຄວາມຄາດຫວັງຂອງສັງຄົມ, ສ້າງຄວາມສັດທາ, ເຊື່ອໝັ້ນ ແລະ ການສະໜັບສະໜູນຢ່າງແຂງແຮງຂອງປະຊາຊົນ ຕໍ່ບົດບາດການນຳພາຂອງພັກເຮົາ.

### 2. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ.

ວັນທີ 30 ເມສາ 2025, ສສ ຫວຽດນາມ ໄດ້ຈັດພິທີ ເດີນຂະບວນສວນສະໜາມສະເຫຼີມສະຫຼອງ 50 ປີ ແຫ່ງວັນປົດປ່ອຍພາກໃຕ້ ຫວຽດນາມ, ທ້ອນໂຮມປະເທດຊາດເປັນເອກະພາບ (30 ເມສາ 1975 – 30 ເມສາ 2025) ຢູ່ນະຄອນໂຮ່ຈິມິນ; ມີການນຳຂັ້ນສູງຂອງພັກ, ລັດຫວຽດນາມ ແລະ ຕ່າງປະເທດເຂົ້າຮ່ວມ ມີກ້ອນຂະບວນເດີນສວນສະໜາມ ມີ 13,000 ຄົນ ເຂົ້າຮ່ວມ; ໃນນັ້ນ, ມີກ້ອນກຳລັງຂອງ ກອງທັບປະຊາຊົນລາວ, ກອງທັບປະຊາຊົນຈີນ ແລະ ກອງທັບຣາຊະອານາຈັກກຳປູເຈຍ ເຂົ້າຮ່ວມສວນສະໜາມດ້ວຍ. ໃນພິທີ ຍັງມີການສະແດງອາວຸດຍຸດໂທປະກອນທາງການທະຫານ ຂອງກອງທັບຫວຽດນາມ.

ໃນພິທີເປີດງານດັ່ງກ່າວ ສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ກ່າວປາໄສ ຊຶ່ງມີເນື້ອໃນບາງຕອນວ່າ: 50 ປີ ແຫ່ງ ວັນປົດປ່ອຍພາກໃຕ້ຫວຽດນາມ ແມ່ນຂີດໝາຍອັນສະຫງ່າງາມໃນປະຫວັດສາດ ແຫ່ງການກໍ່ສ້າງ ແລະ ປ້ອງກັນປະເທດ; ເປັນຂີດໝາຍການສິ້ນສຸດລົງ ຂອງການຕໍ່ສູ້ຢ່າງເດັດດ່ຽວໜຽວແໜ້ນເພື່ອເອກະລາດ, ເສລີພາບ, ແລະ ການໂຮມປະເທດຊາດເປັນເອກະພາບ; ຢຸດຕິການຄອບງຳຫຼາຍກວ່າໜຶ່ງສັດຕະວັດ ຂອງລັດທິອານານິຄົມເກົ່າ ແລະ ໃໝ່ ນຳປະເທດກ້າວເຂົ້າສູ່ຍຸກໃໝ່-ຍຸກເອກະລາດແຫ່ງຊາດ ແລະ ສັງຄົມນິຍົມ ຈາກໄຊຊະນະດັ່ງກ່າວ ສາມາດຖອດຖອນໄດ້ 7 ບົດຮຽນ ອັນລ້ຳຄ່າ ຄື (1) ບົດຮຽນໃນການເສີມຂະຫຍາຍກຳລັງແຮງຂອງປະຊາຊົນ ແລະ ມະຫາສາມັກຄີທົ່ວປວງຊົນທັງຊາດ, ສົມທົບກັນຢ່າງແໜ້ນແຟ້ນ ກັບກຳລັງແຮງຂອງຊາດ; (2) ບົດຮຽນໃນການເສີມຂະຫຍາຍນ້ຳໃຈຮັກຊາດ, ຄວາມເອກອ້າງທະນົງໃຈຂອງຊາດ ແລະ ຄວາມ

ເອກອ້າງທະນົງໃຈ; ຈິດໃຈຂອງເອກະລາດ, ກຸ້ມຕົນເອງ, ຄວາມກ້າຫານ ແລະ ຄວາມຢືດຢຸ່ນ; ຄວາມຕັດສິນໃຈຕໍ່ສູ້ ແລະ ຍາດເອົາໄຊຊະນະຂອງທົ່ວພັກ, ທົ່ວປວງຊົນ ແລະ ກອງທັບ; (3) ບົດຮຽນໃນການຍົກສູງເອກະລາດແຫ່ງຊາດ ແລະ ສັງຄົມນິຍົມ, ກຳນົດທິດທາງທີ່ຖືກຕ້ອງ, ເໝາະສົມກັບເງື່ອນໄຂ ແລະ ຄຸນລັກສະນະຂອງການປະຕິວັດຫວຽດນາມ; (4) ບົດຮຽນໃນການນຳໃຊ້ ແລະ ພັດທະນາວິວັດການຕໍ່ສູ້ ແລະ ວິທີການຕໍ່ສູ້ຂອງທົ່ວປວງຊົນ ແລະ ຮອບດ້ານ; ພັດທະນາທິດສະດີ ທີ່ເປັນເອກະລັກ ແລະ ສ້າງສັນ ຂອງສິງຄາມປະຊາຊົນ ແລະ ສິລະປະການທະຫານ; “ໃຊ້ຄົນໜ້ອຍຕໍ່ສູ້”, “ໃຊ້ຄວາມເມດຕາເພື່ອທົດແທນການໃຊ້ຄວາມຮຸນແຮງ” (5) ບົດຮຽນແຫ່ງການຍຶດໝັ້ນ, ຍຶດເອົາໂອກາດ ແລະ ບຸກໂຈມຕີຢ່າງວ່ອງໄວ, ກ້າຫານ, ຕັ້ງໜ້າ, ມີຫົວຄິດປະດິດສ້າງ ແລະ ເດັດດ່ຽວປະຕິບັດການບຸກໂຈມຕີທົ່ວປະເທດພາກພື້ນໃນປີ 1975 ໃຫ້ໄດ້ຮັບໄຊຊະນະຢ່າງຄົບຖ້ວນ. (6) ບົດຮຽນແຫ່ງຄວາມເມດຕາສົງສານ, ຄວາມປອງດອງຊາດ, ການວາງອະດີດໄວ້ເບື້ອງຫຼັງ ແລະ ເບິ່ງອະນາຄົດຫຼັງໄຊຊະນະ. (7) ການຮັກສາການນຳພາຂອງພັກຢ່າງໝັ້ນຄົງ; ກໍ່ສ້າງພັກໃຫ້ເຂັ້ມແຂງໃນທຸກດ້ານ; ຍົກສູງຄວາມສາມາດນຳພາ ແລະ ກຳລັງແຮງຕໍ່ສູ້ຂອງພັກ ໃນຂະບວນການຕໍ່ສູ້ປົດປ່ອຍຊາດ ທ້ອນໂຮມປະເທດຊາດເປັນເອກະພາບ ແລະ ປົກປັກຮັກສາບັນດາຜົນງານລັດທິ ຂອງສັງຄົມນິຍົມ.

**ກອງປະຊຸມສະໄໝສາມັນ ເທື່ອ 09 ຂອງສະພາແຫ່ງຊາດ ສສ ຫວຽດນາມ:** ຈັດຂຶ້ນໃນວັນທີ 05 ພຶດສະພາ 2025 ໄດ້ປຶກສາຫາລື ແລະ ປະກອບຄຳເຫັນ ຕໍ່ຫຼາຍເນື້ອໃນສຳຄັນຄື: (1) ວຽກງານປັບປຸງ ລັດຖະທຳມະນູນຕາມທິດ ‘‘ກະທັດຮັດ, ປະສິດທິພາບ, ປະສິດທິຜົນ, ໃກ້ຊິດຕິດແທດກັບປະຊາຊົນ, ແທດຕົວຈິງ’’ ຄາດວ່າລັດຖະທຳມະນູນສະບັບປັບປຸງ ຈະໃຫ້ສຳເລັດ ແລະ ຮັບຮອງເອົາ ກ່ອນວັນທີ 30 ມິຖຸນາ 2025 ແລະ ປະກາດໃຊ້ ແຕ່ວັນທີ 01 ກໍລະກົດ 2025 ເປັນຕົ້ນໄປ. (2) ຮັບຮອງເອົາໂຄງການສ້າງກົດໝາຍ 34 ສະບັບ, ມະຕິ 14 ສະບັບ ແລະ ປະກອບຄຳເຫັນຕໍ່ຮ່າງກົດໝາຍອື່ນໆ 06 ສະບັບ ໃນບັນດາຂົງເຂດ: ກົງຈັກການຈັດຕັ້ງລັດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຍຸຕິທຳ, ຄຸ້ມຄອງທຶນລັດ, ການເງິນ-ງົບປະມານລັດ, ສຶກສາ-ກໍ່ສ້າງ, ວິທະຍາສາດ-ເຕັກໂນໂລຊີ ແລະ ອື່ນໆ; (3) ພິຈາລະນາບັນດາບົດລາຍງານຂອງລັດຖະບານ ກ່ຽວກັບ ຕົວເລກງົບປະມານລັດ ປີ 2024; ຕີລາຄາ, ເພີ່ມເຕີມຜົນ ຂອງການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ໄລຍະຕົ້ນປີ 2025. (4) ພິຈາລະນາ ແລະ ຮັບຮອງເອົາມະຕິ ວ່າດ້ວຍ ການໂຮມຫົວໜ່ວຍການປົກຄອງຂັ້ນແຂວງ; ສ້າງຕັ້ງສະພາການເລືອກຕັ້ງແຫ່ງຊາດ; ຕົກລົງຫຼຸດອາຍຸການ ຂອງສະພາແຫ່ງຊາດ ຊຸດທີ 15 ແລະ ສະພາປະຊາຊົນ ຂັ້ນຕ່າງໆ ໄລຍະ 2021-2026; ກຳນົດວັນເວລາການເລືອກຕັ້ງສະພາແຫ່ງຊາດ ຊຸດທີ 16 ແລະ ເລືອກຕັ້ງຜູ້ແທນສະພາປະຊາຊົນສະໄໝ 2026-2031; ພິຈາລະນາ ແລະ ຮັບຮອງເອົາບັນດາມະຕິ ວ່າດ້ວຍ ການສັບຊ້ອນ, ຈັດຕັ້ງຫົວໜ່ວຍປົກຄອງຂັ້ນຕາແສງ. (5) ພິຈາລະນາ ບົດລາຍງານຂອງແນວໂຮມປະເທດຊາດຫວຽດນາມ ໃນການຮຽບໂຮມເອົາຄຳຄິດເຫັນ, ຄຳສະເໜີຕໍ່ກອງປະຊຸມເທື່ອທີ 9 ສະພາແຫ່ງຊາດ ຊຸດທີ 15; ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຜົນຂອງການຕິດຕາມການແກ້ໄຂຄຳສະເໜີຕ່າງໆ ທີ່ສະເໜີຕໍ່ກອງປະຊຸມ ເທື່ອທີ 08 ຄັ້ງຜ່ານມາ.

**2) ພັກກອມມູນິດຈີນ.**

ວັນທີ 07-10 ພຶດສະພາ 2025, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກ, ປະທານປະເທດຈີນ ໄດ້ຢ້ຽມຢາມ ຣັດເຊຍ ຢ່າງເປັນທາງການ ແລະ ເຂົ້າຮ່ວມສະເຫຼີມສະຫຼອງໄຊຊະນະສົງຄາມຮັກຊາດ ຂອງສະຫະພາບໂຊວຽດ ຄົບຮອບ 80 ປີ ທີ່ຈັດຂຶ້ນຢູ່ ນະຄອນຫຼວງມົດສະກູ ໃນວັນທີ 09 ພຶດສະພາ 2025. ການຢ້ຽມຢາມຄັ້ງນີ້ ເປັນການສ້າງຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ ດ້ານການເມືອງ ລະຫວ່າງ ຈີນ-ຣັດເຊຍ ໃຫ້ເລິກເຊິ່ງ, ເພີ່ມທະວີການຮ່ວມມືຍຸດທະສາດ, ຊຸກຍູ້ການຮ່ວມມືຕົວຈິງ ໃນຂົງເຂດຕ່າງໆ ເພື່ອຜົນປະໂຫຍດຂອງປະຊາຊົນສອງປະເທດ ໃຫ້ຫຼາຍກວ່າເກົ່າ. ຈີນ ແລະ ຣັດເຊຍ ຈະເພີ່ມທະວີການຮ່ວມມືຢ່າງແໜ້ນແຟ້ນ ໃນເວທີຫຼາຍຝ່າຍ ເຊັ່ນ: ອົງການສະຫະປະຊາຊາດ, ອົງການຮ່ວມມືຊຽງໄຮ້, ກຸ່ມ BRICS ແລະ ປະເທດກຳລັງພັດທະນາເຂດໂລກໃຕ້ (Global South), ເປັນແກນນຳການປະຕິຮູບການປົກຄອງໂລກ ໃນທິດທາງທີ່ຖືກຕ້ອງ, ຄັດຄ້ານລັດທິຝ່າຍດຽວ ແລະ ຮ່ວມກັນຊຸກຍູ້ການພັດທະນາໂລກຫຼາຍຂົ້ວທີ່ສະເໝີພາບ, ເສດຖະກິດໂລກາພິວັດ ຕ່າງຝ່າຍຕ່າງໄດ້ຮັບຜົນ

ປະໂຫຍດ. ພ້ອມກັນນີ້, ທັງສອງຝ່າຍໄດ້ລົງນາມ ບົດບັນທຶກການພົບປະເຈລະຈາ ລະຫວ່າງ ສອງຜູ້ນຳ ໃນວັນທີ 08 ພຶດສະພາ 2025 ຊຶ່ງໄດ້ມີການເຊັນເອກະສານການຮ່ວມມືຫຼາຍກວ່າ 20 ສະບັບ.

### 3. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

#### 1) ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

ວັນທີ 25-30 ພຶດສະພາ 2025, ທ່ານ ມາຄຣົງ, ປະທານາທິບໍດີຝຣັ່ງ ໄດ້ເດີນທາງຢ້ຽມຢາມ 03 ປະເທດ ສະມາຊິກອາຊຽນ 3 ເຊັ່ນ: ຫວຽດນາມ, ອິນໂດເນເຊຍ ແລະ ສິງກະໂປ. ເລີ່ມຕົ້ນຢ້ຽມຢາມຫວຽດນາມ ລະຫວ່າງວັນທີ 25-27 ພຶດສະພາ 2025 ເພື່ອຊຸກຍູ້ການພົວພັນຮ່ວມມືຍຸດທະສາດຮອບດ້ານ ຂອງສອງຝ່າຍ, ໄດ້ພົບປະກັບ ທ່ານ ເລືອງເກືອງ, ປະທານປະເທດຫວຽດນາມ. ສອງຝ່າຍ ປຶກສາຫາລືຮ່ວມກັນໃນຫຼາຍຂົງເຂດ ແລະ ໂຄງການຕ່າງໆ ເພື່ອຊຸກຍູ້ບັນດາບຸລິມະສິດການຮ່ວມມື ເຊັ່ນ: ເສດຖະກິດ-ການຄ້າ-ການລົງທຶນ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ນະວັດຕະກຳ, ວິທະຍາສາດ-ເຕັກໂນໂລຊີ, ການສຶກສາ-ການຝຶກອົບຮົມ ແລະ ສາທາລະນະສຸກ ແລະ ໄດ້ຮ່ວມລົງນາມບັນດາການຮ່ວມມື ດັ່ງກ່າວ. ຊຶ່ງຝຣັ່ງ ເປັນປະເທດທຳອິດໃນສະຫະພາບເອີຣົບ ທີ່ມີການພົວພັນຍຸດທະສາດຮອບດ້ານກັບຫວຽດນາມ. ຈາກນັ້ນ, ໄດ້ສືບຕໍ່ຢ້ຽມຢາມ ອິນໂດເນເຊຍ ໃນວັນທີ 27-28 ພຶດສະພາ2025, ໂດຍໄດ້ພົບປະກັບ ທ່ານ ຊູບີອານໂຕ້, ປະທານາທິບໍດີອິນເດເນເຊຍ ເພື່ອສະເຫຼີມສະຫຼອງ ວັນສ້າງຕັ້ງສາຍພົວພັນການທູດຄົບຮອບ 75 ປີ ລະຫວ່າງ ຝຣັ່ງ ແລະ ອິນໂດເນເຊຍ. ສອງຝ່າຍ ໄດ້ມີປຶກສາຫາລື ກ່ຽວກັບ ການເພີ່ມທະວີການຮ່ວມມື ດ້ານປ້ອງກັນປະເທດ ແລະ ການຄ້າ, ສຸມໃສ່ພັດທະນາອຸປະກອນການທະຫານຮ່ວມ ຄື: ເຮືອບິນສູ້ຮົບ, ເຮືອດຳນ້ຳ ແລະ ມີການລົງນາມໃນເອກະສານ ຊຸກຍູ້ການຮ່ວມມືດ້ານລະບົບອາວຸດທາງຍຸດທະສາດ ລະຫວ່າງ 02 ປະເທດ. ທ່ານ ມາຄຣົງ ໄດ້ຢ້ຽມຢາມສິງກະໂປ ໃນວັນທີ 29-30 ພຶດສະພາ 2025, ໄດ້ພົບປະກັບທ່ານ ລໍເຣນ ວອງ, ນາຍົກສິງກະໂປ ສອງຝ່າຍ ເຫັນດີຊຸກຍູ້ການຮ່ວມມືດ້ານຄວາມໝັ້ນຄົງ ແລະ ປັນຍາປະດິດ. ທ່ານ ມາຄຣົງ ຍັງໄດ້ກ່າວປາໄສ ທີ່ກອງປະຊຸມສຸດຍອດ ດ້ານການປ້ອງກັນປະເທດ ລະດັບສູງຂອງອາຊີ ຢູ່ ສິງກະໂປ (Shangri-La). ການຢ້ຽມຢາມບັນດາປະເທດອາຊຽນຂອງ ທ່ານ ມາຄຣົງ ທີ່ສະແດງໃຫ້ເຫັນເຖິງ ຄວາມພະຍາຍາມ ດ້ານຍຸດທະສາດ ຂອງຝຣັ່ງ ໃນການລົງເລິກການພົວພັນກັບ ບັນດາປະເທດໃນອາຊີຕາເວັນອອກສ່ຽງໃຕ້, ໂດຍສະເພາະແມ່ນ ການຮ່ວມມືດ້ານປ້ອງກັນຊາດ, ການພົວພັນຄູ່ຮ່ວມມືດ້ານເສດຖະກິດ, ສະໜັບສະໜູນ ບັນດາຂອບການຮ່ວມມືຫຼາຍຝ່າຍ ເພື່ອຕອບສະໜອງ ບັນດາການເຄື່ອນໄຫວ ທາງດ້ານພູມສາດທົ່ວໂລກ.

**ການເມືອງພາຍໃນ ສ. ເກົາຫຼີ**: ວັນທີ 01 ພຶດສະພາ 2025, ທ່ານ ຮັນ ດອກ ຊູ ໄດ້ລາອອກຈາກຕຳແໜ່ງຮັກສາການປະທານາທິບໍດີ ສ. ເກົາຫຼີ ແລະ ທ່ານ ຊຸຍ ຊັງ ມັອກ ກໍໄດ້ລາອອກຈາກຕຳແໜ່ງ ຮອງນາຍົກລັດຖະມົນຕີ ເພື່ອກະກຽມລົງທາສຽງເລືອກຕັ້ງປະທານາທິບໍດີ ສ. ເກົາຫຼີ ຄົນໃໝ່ ທີ່ຈະຈັດຂຶ້ນ ໃນວັນທີ 03 ມິຖຸນາ 2025. ໃນວັນທີ 02 ພຶດສະພາ 2025 ລັດຖະບານ ສ. ເກົາຫຼີ ໄດ້ແຕ່ງຕັ້ງ ທ່ານ ລີ ຈູ ໂຮ, ລັດຖະມົນຕີກະຊວງສຶກສາ ຂຶ້ນເປັນຮັກສາການປະທານາທິບໍດີ ສ. ເກົາຫຼີ ຈົນກວ່າ ຈະໄດ້ປະທານນາທິບໍດີຄົນໃໝ່. ທ່ານ ລີ ຈູ ໂຮ ໄດ້ຊີ້ນຳ ໃຫ້ບັນດາກອງທັບທະຫານ ພາຍໃນນະຄອນຫຼວງເຊອູນ ແລະ ບັນດາແຂວງ ໃຫ້ຮັກສາຄວາມເປັນລະບຽບຮຽບຮ້ອຍ, ຮັບປະກັນຄວາມສະຫງົບ ເພື່ອບໍ່ໃຫ້ມີເຫດການປະທ້ວງໃນໄລຍະການທາສຽງເລືອກຕັ້ງ.

**ການເລືອກຕັ້ງສິງກະໂປ:** ການເລືອກຕັ້ງທົ່ວໄປຂອງ ສິງກະໂປ ໄດ້ຈັດຂຶ້ນກ່ອນກຳນົດໃນວັນທີ 03 ພຶດສະພາ 2025 ເພື່ອເລືອກເອົາສະມາຊິກສະພາ (ສສ) ທັງໝົດ 97 ບ່ອນນັ່ງ (ເພີ່ມຂຶ້ນ 04 ບ່ອນນັ່ງ ຈາກການເລືອກຕັ້ງໃນປີ 2020) ໂດຍມີ 33 ເຂດເລືອກຕັ້ງ; ໃນນີ້ມີ 18 ເຂດເລືອກຕັ້ງຕົວແທນເປັນກຸ່ມ (GRC) ແລະ 15 ເຂດເລືອກຕັ້ງສະມາຊິກສະພາຄົນດຽວ (SMC). ມີຜູ້ລົງສະໝັກເລືອກຕັ້ງທັງໝົດ 211 ທ່ານ ຈາກ 11 ພັກການເມືອງ ແລະ ຜູ້ສະໝັກອິດສະຫຼະ 02 ທ່ານ, ໃນນີ້ມີຜູ້ລົງສະໝັກໜ້າໃໝ່ເພີ່ມຂຶ້ນ 89 ຄົນ (ຈາກ 76 ຄົນ ໃນການເລືອກຕັ້ງໃນປີ 2020) ຈາກທຸກພັກການເມືອງ, ຜູ້ລົງສະໝັກທີ່ເປັນເພດຍິງທັງໝົດມີ 53 ຄົນ ເພີ່ມຂຶ້ນຈາກ 40 ຄົນ ໃນການເລືອກຕັ້ງໃນປີ 2020 ກວມເອົາ 25% ຂອງຈຳນວນຜູ້ລົງສະໝັກທັງໝົດ. ພົນລະເມືອງສິງກະໂປ ທີ່ມາລົງຄະແນນສຽງຕົວຈິງມີ 2,429,281 ຄົນ, ກວມເອົາ 92,47% ຂອງຜູ້ມີສິດປ່ອນບັດເລືອກຕັ້ງທັງໝົດ 2,625,826 ຄົນ. ຜົນການເລືອກຕັ້ງທົ່ວໄປ ແມ່ນພັກກິດປະຊາຊົນ (PAP), ເຊິ່ງເປັນພັກກຳອຳນາດ ໄດ້ຮັບໄຊຊະນະຢ່າງຖ້ວມລົ້ນ ດ້ວຍ

ຄະແນນສຽງ 65,75% (ເພີ່ມຂຶ້ນ 4, 24 % ທຽບໃສ່ການເລືອກຕັ້ງປີ 2020 ທີ່ໄດ້ຮັບຄະແນນ 61,24%) ແລະ 87 ບ່ອນນັ່ງ/ສສ, ໃນຂະນະທີ່ ພັກແຮງງານ (WP), ເຊິ່ງເປັນພັກຝ່າຍຄ້ານ ໄດ້ຮັບ 10 ບ່ອນນັ່ງ/ສສ (ໄດ້ຈຳນວນເທົ່າເດີມ ກັບ ການເລືອກຕັ້ງປີ 2020). ພັກແຮງງານ (WP) ຍັງໄດ້ອີກ 02 ບ່ອນນັ່ງ ທີ່ບໍ່ແມ່ນສະມາຊິກສະພາ (ສສ) ທີ່ໄດ້ຮັບເລືອກຕັ້ງ (Non Constituency Member of Parliament ຫຼື NCMP). ສ່ວນພັກ PSP ແມ່ນບໍ່ໄດ້ຈັກບ່ອນນັ່ງ, ເຊິ່ງເປັນຜົນການເລືອກຕັ້ງທີ່ຕົກຕ່ຳ ສຳລັບພັກ PSP (ໃນການເລືອກຕັ້ງປີ 2020 ພັກ PSP ໄດ້ 02 ບ່ອນນັ່ງ NCMP).ພາຍຫຼັງໄດ້ຮັບໄຊຊະນະດັ່ງກ່າວຂອງ ພັກກິດປະຊາຊົນ (PAP) ໃນວັນທີ 22 ພຶດສະພາ 2025, ທ່ານ ລໍເຣນ ວອງ (Lawrence WONG), ນາຍົກລັດຖະມົນຕີ ສິງກະໂປ ໄດ້ປະກາດ ການປະກອບຄະນະລັດຖະບານຊຸດໃໝ່ລວມທັງໝົດ 18 ທ່ານ ແລະ ໄດ້ມີພິທີສະບານຕົນຂອງລັດຖະບານຊຸດໃໝ່ ຕໍ່ປະທະນາທິບໍດີ ໃນວັນທີ 23 ພຶດສະພາ 2025, ຊຶ່ງ ທ່ານ ລໍເຣນ ວອງ ເປັນນາຍົກລັດຖະມົນຕີ ທັງເປັນລັດຖະມົນຕີກະຊວງການເງິນ. ສ່ວນ ທ່ານ ລີ ຊຽນ ລອງ (Lee Hsien Loong) ເປັນລັດຖະມົນຕີອາວຸໂສ, ທ່ານ ກອນ ຄິມ ຢອງ (Gan Kim Yong) ເປັນຮອງນາຍົກລັດຖະມົນຕີ ທັງເປັນ ລັດຖະມົນຕີກະຊວງອຸດສະຫະກຳ ແລະ ການຄ້າ. ໃນຄະນະລັດຖະບານຊຸດໃໝ່ ບໍ່ໄດ້ແຕ່ງຕັ້ງຮອງນາຍົກລັດຖະມົນຕີເພີ່ມຕື່ມ ເຮັດໃຫ້ມີຮອງນາຍົກລັດຖະມົນຕີພຽງຄົນດຽວ ຄື: ທ່ານ ກອນ ຄິມ ຢອງ, ເຊິ່ງແຕກຕ່າງຈາກລັດຖະບານຊຸດຜ່ານໆມາ ທີ່ມີຮອງນາຍົກລັດຖະມົນຕີ 02 ທ່ານ. ເຖິງຢ່າງໃດກໍຕາມ, ໄດ້ມີການແຕ່ງຕັ້ງ ລັດຖະມົນຕີປະສານງານ (Coordinating minister) 03 ທ່ານ, ເຊິ່ງເປັນຕຳແໜ່ງທີ່ມີຄວາມສຳຄັນຖັດລົງມາ ຈາກຕຳແໜ່ງຮອງນາຍົກລັດຖະມົນຕີ ແຕ່ສູງກວ່າຕຳແໜ່ງລັດຖະມົນຕີອື່ນໆ ເພື່ອຮັບຜິດຊອບຂົງເຂດວຽກງານຄວາມໝັ້ນຄົງແຫ່ງຊາດ, ນະໂຍບາຍສັງຄົມ ແລະ ການບໍລິການສາທາລະນະ ແລະ ຮັບປະກັນວ່ານະໂຍບາຍ ຂອງບັນດາກະຊວງ ທີ່ຢູ່ພາຍໃຕ້ຂົງເຂດທີ່ຕົນຮັບຜິດຊອບນັ້ນບໍ່ຊ້ຳຊ້ອນກັນ ຫຼື ບໍ່ມີຄວາມຂັດແຍ່ງກັນ.

**ການເລືອກຕັ້ງກາງສະໄໝຂອງຟີລິບປິນ:** ການເລືອກຕັ້ງກາງສະໄໝຂອງ ຟີລິບປິນ ຈັດຂຶ້ນໃນວັນທີ 12 ພຶດສະພາ 2025, ພາຍຫຼັງການເລືອກຕັ້ງທົ່ວໄປ ໃນປີ 2022 ຜ່ານມາ ເພື່ອເລືອກຕັ້ງສະມາຊິກສະພາຕ່ຳ 317 ບ່ອນນັ່ງ ແລະ ສະມາຊິກສະພາສູງ 12 ບ່ອນນັ່ງ ແລະ ການເລືອກຕັ້ງເອົາຕຳແໜ່ງຢູ່ຂັ້ນທ້ອງຖິ່ນລວມ 18,000 ຕຳແໜ່ງ. ແຕ່ຫຼາຍຝ່າຍໃຫ້ຄວາມສົນໃຈຕໍ່ການເລືອກຕັ້ງສະມາຊິກສະພາສູງຫຼາຍກວ່າ, ຊຶ່ງຜົນການນັບຄະແນນໄປແລ້ວ 80% ພົບວ່າ ຜູ້ສະໝັກທີ່ມາ ຈາກຝ່າຍສະໜັບສະໜູນຂອງ ທ່ານ ມາກ໋ອດ ຈູເນຍ (Marcos Jr) ໄດ້ບ່ອນນັ່ງໃນສະພາສູງຈຳນວນ 06 ບ່ອນນັ່ງ. ສ່ວນທ່ານ ນາງ ຊາຣາ ດູເຕີເຕ້ (Sara Duterte), ຮອງປະທານາທິບໍດີ ຟີລິບປິນ ລູກສາວຂອງອະດີດປະທານາທິບໍດີ ໂຣດິໂກ ດູເຕີເຕ້ (Rodrigo Duterte), ໄດ້ຮັບ 04 ບ່ອນນັ່ງ. ເມື່ອເຫັນວ່າຕະກູນ ດູເຕີເຕ້ ໄດ້ຮັບບ່ອນນັ່ງໃນສະພາສູງດ້ວຍການຈຳນວນໃກ້ຄຽງກັບຕົນ, ທ່ານ ມາກ໋ອດ ຈູເນຍ, ປະທານາທິບໍດີຟີລິປິນ ຈຶ່ງກ່າວຫາວ່າ ພ້ອມຈະປັບປຸງສາຍພົວພັນກັບຕະກູນດັ່ງກ່າວ ຂະນະດຽວກັນ, ທ່ານ ນາງ ຊາຣາ ດູເຕີເຕ້ ກໍກຳລັງປະເຊີນຂະບວນການຖອດຖອນ ໃນສະພາສູງ, ຊຶ່ງອາດນຳໄປສູ່ການຖືກປົດອອກຈາກຕຳແໜ່ງຮອງປະທານາທິບໍດີ. ເຖິງແມ່ນວ່າ ການເລືອກຕັ້ງກາງສະໄໝ ໃນວັນທີ 12 ພຶດສະພາ ຜ່ານມາ, ຝ່າຍພັນທະມິດຂອງ ທ່ານ ມາກ໋ອດ ຈະໄດ້ບ່ອນນັ່ງໃນສະພາສູງຈຳນວນຫຼາຍກວ່າ ກໍຕາມ, ແຕ່ໄຊຊະນະບາງສ່ວນ ຂອງຜູ້ສະໝັກທີ່ຢູ່ຝ່າຍຄອບຄົວ ດູເຕີເຕ້ ເຮັດໃຫ້ທ່ານ ນາງ ຊາຣາ ຍັງຄົງມີອິດທິພົນໃນສະພາສູງ ຊຶ່ງອາດມີບົດບາດສຳຄັນ ຕໍ່ຜົນການຖອດຖອນດັ່ງກ່າວ. ສະນັ້ນ, ເພື່ອໃຫ້ການບໍລິຫານປະເທດດຳເນີນຕໍ່ໄປ, ປະທານາທິບໍດີ ມາກ໋ອດ ຈຶ່ງເຫັນວ່າ ຄວນປັບປຸງ ຄະນະລັດຖະບານໃໝ່ ໂດຍສະເໜີໃຫ້ ບັນດາລັດຖະມົນຕີ ລາອອກ ເພື່ອການສັບຊ້ອນຄືນໃໝ່, ປັດຈຸບັນ ທ່ານ ແອນຣິເກ ເອ ມານະໂລ (Enrique A. Manalo), ລັດຖະມົນຕີກະຊວງການຕ່າງປະເທດ ໄດ້ລາອອກແລ້ວ.

**ການເລືອກຕັ້ງອົດສະຕາລີ:** ການເລືອກຕັ້ງທົ່ວໄປຂອງ ອົດສະຕາລີ ຈັດຂຶ້ນໃນວັນທີ 03 ພຶດສະພາ 2025 ຊຶ່ງແມ່ນພັກແຮງງານນຳໂດຍ ທ່ານ ແອນໂທນີ ອານບານີສ໌ (Anthony Albanese) ໄດ້ຮັບໄຊຊະນະ ຍາດໄດ້ບ່ອນນັ່ງກວ່າ 70 ບ່ອນນັ່ງຈາກ 150 ບ່ອນນັ່ງ ໃນຂະນະທີ່ຄູ່ແຂ່ງຫຼັກຄື ກຸ່ມແນວໂຮມແຫ່ງຊາດເສລີນິຍົມ (LNP) ເຊິ່ງເປັນກຸ່ມຝ່າຍຄ້ານກາງຂວາ ທີ່ນຳພາໂດຍ ທ່ານ ປີເຕີ ດໍຣຕັນ (Peter Dutton), ໄດ້ 24 ບ່ອນນັ່ງ, ເຮັດໃຫ້ທ່ານ

ແອນໂທນີ ໄດ້ເປັນນາຍົກລັດຖະມົນຕີອິດສະຕາລີ ສະໄໝທີສອງຕິດຕໍ່ກັນໃນຮອບ 21 ປີ ຊຶ່ງທ່ານຈະສຸມໃສ່ແກ້ໄຂບັນຫາພະລັງງານ ແລະ ໄພເງິນເຟີ້ ຕາມທີ່ໄດ້ໂຄສະນາຫາສຽງກ່ອນການເລືອກຕັ້ງ.

**2) ພາກພື້ນເອີຣົບ-ອາເມຣິກາ**

**ບັນຫາອູແກຣນ-ຣັດເຊຍ:** ສືບເຄັ່ງຕຶງ ມີການໂຈມຕີກັນໄປມາທາງອາກາດດ້ວຍໂດຣນ ແລະ ປືນໃຫຍ່, ອູແກຣນປະຕິເສດຂໍ້ສະເໜີຢຸດຍິງ 03 ວັນ ຂອງຣັດເຊຍ ໃນໄລຍະສະເຫຼີມສະຫຼອງວັນແຫ່ງໄຊຊະນະຂອງສົງຄາມໂລກ ຄັ້ງທີ II, ຊຶ່ງ ທ່ານ ເຊເລນສະກີ ໄດ້ຂູ່ບັນດາຜູ້ນຳໂລກ ທີ່ຈະເຂົ້າຮ່ວມງານໃນວັນທີ 09 ພຶດສະພາ 2025 ທີ່ ນະຄອນຫຼວງມົດສະກູ ໂດຍລະບຸວ່າ ບໍ່ສາມາດຮັບປະກັນຄວາມປອດໄພ ຂອງພວກເຂົາໄດ້ ແຕ່ໃນພິທີດັ່ງກ່າວ ບໍ່ມີການໂຈມຕີເກີດຂຶ້ນເຮັດໃຫ້ການສະເຫຼີມສະຫຼອງດຳເນີນໄປດ້ວຍຜົນສຳເລັດ. ຂະນະທີ່ ສ. ອາເມຣິກາ ໄດ້ອະນຸມັດຂໍ້ຕົກລົງມູນຄ່າ 310,5 ລ້ານໂດລາສະຫະລັດ ເພື່ອສະໜັບສະໜູນການໃຊ້ງານເຮືອບິນຂັບໄລ່ F-16 ທີ່ບັນດາຜູ້ສະໜັບສະໜູນໃນເອີຣົບ ສະໜອງໃຫ້ອູແກຣນ. ການເຄື່ອນໄຫວດັ່ງກ່າວ ເກີດຂຶ້ນຫຼັງຈາກທີ່ ສ. ອາເມຣິກາ ແລະ ອູແກຣນ ລົງນາມໃນຂໍ້ຕົກລົງໃຫ້ສິດແກ່ ສ. ອາເມຣິກາ ເຂົ້າເຖິງຊັບພະຍາກອນທຳມະຊາດ ຂອງອູແກຣນ ແລະ ຊ່ວຍເຫຼືອອູແກຣນ ໃນອະນາຄົດ. ຄຽງຄູ່ກັບສະຖານະການທີ່ເກີດຂຶ້ນ, ຣັດເຊຍ ແລະ ອູແກຣນ ໄດ້ເຈລະຈາ ທີ່ ນະຄອນຫຼວງອິດສະຕັນບູນ, ປະເທດ ຕວັກກີ ໃນວັນທີ 15 ພຶດສະພາ 2025 ເປັນການເຈລະຈາ ເພື່ອຢຸດຕິສົງຄາມ ແລະ ເຫັນດີແລກປ່ຽນນັກໂທດ ຝ່າຍລະ 1,000 ຄົນ; ຝ່າຍຣັດເຊຍ ບໍ່ເຫັນດີ ໃຫ້ມີການພົບປະລະຫວ່າງ 02 ປະທານາທິບໍດີ ຕາມຄຳຮຽກຮ້ອງ ຂອງອູແກຣນ ແລະ ບໍ່ຖືເປັນຄູ່ຮ່ວມຕຳແໜ່ງທີ່ຖືກຕ້ອງຕາມກົດໝາຍ ທັງບໍ່ຮັບຄຳສະເໜີຢຸດຍິງຊົ່ວຄາວແຕ່ຢາກໃຫ້ສ້າງສັນຕິພາບທີ່ຍືນຍົງ ໃນພາກພື້ນ ໂດຍໃຫ້ ອູແກຣນ ຮັກສາສະຖານະລັດເປັນກາງ, ຖອນທະຫານແລະ ຮັບຮອງດິນແດນທີ່ ຣັດເຊຍ ຍຶດໄດ້, ບໍ່ຮຽກຮ້ອງໃຫ້ຊົດເຊີຍປົວແປງສົງຄາມ; ສ່ວນອູແກຣນ ບໍ່ພໍໃຈກັບຂໍ້ສະເໜີຂອງຣັດເຊຍ. ຕໍ່ມາໃນວັນທີ 23 ພຶດສະພາ 2025, ອູແກຣນ ໄດ້ໂຈມຕີໃສ່ 04 ແຄວ້ນທາງພາກຕາເວັນອອກຂອງອູແກຣນ ທີ່ຣັດເຊຍຢຶດຄອງດ້ວຍໂດຣນຫຼາຍກວ່າ 500 ລູກ ເຮັດໃຫ້ຣັດເຊຍຕອບໂຕ້ດ້ວຍການຍິງຂີປະນາວຸດ ແລະ ໂດຣນ ໃສ່ທົ່ວອູແກຣນລວມທັງນະຄອນຫຼວງກີແອບ.

**80 ປີ ວັນແຫ່ງໄຊຊະນະຣັດເຊຍ:** ວັນທີ 09 ພຶດສະພາ 2025, ຣັດເຊຍ ໄດ້ສະເຫຼີມສະຫຼອງຄົບຮອບ 80 ປີວັນແຫ່ງໄຊຊະນະສົງຄາມຮັກຊາດ ຂອງສະຫະພາບໂຊວຽດ ໂດຍໄດ້ມີການຈັດງານໂຮມຊຸມນຸມ ແລະ ພິທີຕ້ອນຮັບແຂກ ຂຶ້ນໃນທົ່ວປະເທດ ເພື່ອເປັນກຽດແກ່ ບັນດານັກຮົບເກົ່າ ໃນມະຫາສົງຄາມຮັກຊາດ (1941 – 1945). ໃນພິທີຄັ້ງນີ້, ມີກ້ອນກຳລັງເດີນສວນສະໜາມ ຈຳນວນ 11.500 ຄົນ ທີ່ມາຈາກ 13 ປະເທດ ລວມທັງກ້ອນກຳລັງຈາກກອງທັບປະຊາຊົນລາວ ເຂົ້າຮ່ວມ ແລະ ມີຜູ້ນຳຂັ້ນປະມຸກລັດຈາກ 29 ປະເທດ, ຂັ້ນລັດຖະມົນຕີ 31 ປະເທດ ເຂົ້າຮ່ວມ ເປັນຕົ້ນ: ທ່ານ ສີ ຈິ້ນຜິງ, ປະທານປະເທດຈີນ, ທ່ານ ໂຕ ເລິມ, ເລຂາທິການໃຫຍ່ພັກກອມມູນິດຫວຽດນາມ ແລະ ທ່ານ ນິໂກລັສ ມາດູໂຣ, ປະທານາທິບໍດີ ເວເນຊູເອລາ. ນອກນີ້, ຍັງມີຜູ້ນຳຈາກ ບັດດາປະເທດເພື່ອນມິດ ແລະຜູ້ແທນລະດັບສູງເຂົ້າຮ່ວມ. ໃນໂອກາດນີ້, ທ່ານ ວະລາດິເມຍ ປູຕິນ ໄດ້ມີການພົບປະສອງຝ່າຍ ຫຼາຍກວ່າ 15 ຄະນະລະຫວ່າງວັນທີ 07-10 ພຶດສະພາ 2025. ການຢ້ຽມຢາມມົດສະກູຂອງ ທ່ານ ສີ ຈິ້ນຜິງ ແລະ 29 ຜູ້ນຳຂອງໂລກ ໃນຄັ້ງນີ້ສະແດງໃຫ້ເຫັນວ່າ ຣັດເຊຍ ບໍ່ໄດ້ຖືກໂດດດ່ຽວຈາກສາກົນ. ທ່ານ ວະລາດິເມຍ ປູຕິນ ໄດ້ກ່າວປາໄສ ບາງຕອນວ່າ: ຣັດເຊຍ ເຄີຍເປັນຜູ້ຊະນະໃນການຕໍ່ຕ້ານ ລັດທິນາຊີ ແລະ ຈະສືບຕໍ່-ຕໍ່ສູ້ຕ້ານກັບ ຄວາມຢ້ານກົວຕໍ່ ຣັດເຊຍ (Russophobia) ແລະ ການຈຳແນກຊາວຣັດເຊຍເຊື້ອສາຍ ຢິວ, ຊຶ່ງພິທີສະເຫຼີມສະຫຼອງດັ່ງກ່າວ ເປັນສັນຍາລັກແຫ່ງໄຊຊະນະຂອງໂຊວຽດ ເໜືອພວກນາຊີ ເຢຍລະມັນ ໃນສົງຄາມໂລກຄັ້ງທີ II ແລະ ປັດຈຸບັນ, ກອງທະຫານທົ່ວປະເທດ ກຳລັງເຂົ້າຮ່ວມປະຕິບັດການທາງທະຫານ ຕ້ານລະບອບການປົກຄອງກີແອບ (Kiev Regime), ຣັດເຊຍ ຈື່ຈຳບົດຮຽນຂອງສົງຄາມໂລກຄັ້ງທີ II ແລະ ຈະບໍ່ໃຫ້ຄວາມຊົ່ວຮ້າຍດັ່ງຊຸມປີນັ້ນເກີດຂຶ້ນອີກ ແລະ ຈະບໍ່ຍອມຮັບການບິດເບືອນ ຂອງເຫດການດັ່ງກ່າວ ຫຼື ຄວາມພະຍາຍາມເພື່ອປ່ຽນແປງ ແລະ ໃສ່ຮ້າຍປ້າຍສີຜູ້ຊະນະທີ່ແທ້ຈິງ.

**ຄວາມຂັດແຍ່ງດ້ານການຄ້າລະຫວ່າງ ສປ ຈີນ ແລະ ສ. ອາເມຣິກາ**: ໃນວັນທີ 12 ພຶດສະພາ 2025, ສ. ອາເມຣິກາ ແລະ ສປ ຈີນ ໄດ້ບັນລຸຂໍ້ຕົກລົງໃນການຫຼຸດພາສີຕອບໂຕ້ ເຊິ່ງກັນ ແລະ ກັນ ເປັນເວລາ 90 ວັນ. ຂໍ້ຕົກລົງ

ດັ່ງກ່າວ ດຳເນີນໄປຕາມການເຈລະຈາດ້ານການຄ້າ ຢູ່ ເມືອງເຊີແນວ, ປະເທດສະວິດ. ໃນນັ້ນ ສອງຝ່າຍ ກ່າວວ່າ ໄດ້ມີຄວາມຄືບໜ້າທີ່ສຳຄັນ ແລະ ເນັ້ນໜັກເຖິງຄວາມສຳຄັນ ຂອງການພົວພັນເສດຖະກິດແບບຍືນຍົງ ແລະ ມີຜົນປະໂຫຍດຮ່ວມກັນໃນໄລຍະຍາວ ພາຍໃຕ້ຂໍ້ຕົກລົງ ສ. ອາເມຣິກາ ຈະຫຼຸດອັດຕາພາສີນຳເຂົ້າສິນຄ້າຂອງຈີນ ຈາກ 145% ລົງເປັນ 30%, ພ້ອມກັນນັ້ນ, ສປ ຈີນ ກໍຫຼຸດອັດຕາພາສີນຳເຂົ້າສິນຄ້າຂອງ ສ. ອາເມຣິກາ ຈາກ 125% ລົງເຫຼືອພຽງ 10% ໂດຍຈະມີຜົນບັງຄັບໃຊ້ ນັບແຕ່ວັນທີ 14 ພຶດສະພາ2025 ເປັນຕົ້ນໄປ. ການຫຼຸດອັດຕາພາສີເຖິງ 115% ໃນບາງລາຍການ ບໍ່ພຽງແຕ່ຊ່ວຍໃຫ້ການຄ້າ ລະຫວ່າງ ສອງປະເທດ ກັບມາເຄື່ອນໄຫວໄດ້ຕາມກົນໄກຕະຫຼາດ, ແຕ່ຍັງສົ່ງຜົນດີ ຕໍ່ລະບົບຕ່ອງໂສ້ເສດຖະກິດທົ່ວໂລກ ອີກດ້ວຍ. ແນວໃດກໍຕາມ, ວັນທີ 19 ພຶດສະພາ 2025, ສປ ຈີນ ຮຽກຮ້ອງໃຫ້ ສ. ອາເມຣິກາ ແກ້ໄຂການກະທຳທີ່ບໍ່ເໝາະສົມທັນທີ ແລະ ຢຸດຕິການເລືອກປະຕິບັດ ຫຼັງຈາກທີ່ລັດຖະບານ ສ. ອາເມຣິກາ ອອກຄຳແນະນຳເຕືອນບໍລິສັດຕ່າງໆ ບໍ່ໃຫ້ນຳໃຊ້ຊິບຄອມພິວເຕີຂັ້ນສູງ ຈາກ ສປ ຈີນ ລວມເຖິງຊິບ AI ຂອງ Huawei. ກະຊວງການຄ້າຈີນ ລະບຸໃນຖະແຫຼງການວ່າ ການກະທຳຂອງ ສ. ອາເມຣິກາ ເປັນການທຳລາຍຢ່າງຮ້າຍແຮງ ຕໍ່ຄວາມເຫັນດີເຫັນພ້ອມ ຂອງທັງສອງຝ່າຍ ທີ່ໄດ້ຕົກລົງຮ່ວມກັນໃນການເຈລະຈາ ທີ່ ເຊີແນວ, ປະເທດສະວິດ, ພ້ອມທັງປະກາດວ່າ ຈະຕອບໂຕ້ດ້ວຍມາດຕະການທີ່ເດັດຂາດ ຖ້າຫາກ ສ. ອາເມຣິກາ ຍັງຄົງດຳເນີນການສ້າງຄວາມເສຍຫາຍຕໍ່ຜົນປະໂຫຍດຂອງ ສປ ຈີນ.

**ການເລືອກຕັ້ງການາດາ:** ວັນທີ 29 ເມສາ 2025, ທ່ານ ມາກ ຄານີ (Mark Carney), ຈາກພັກເສລີນິຍົມ ໄດ້ຮັບໄຊຊະນະ ໃນການເລືອກຕັ້ງທົ່ວໄປຂອງການາດາ (ເປັນຄັ້ງທີ IV ຕິດຕໍ່ກັນ), ສາມາດຍາດໄດ້ຫຼາຍກວ່າ 160 ບ່ອນນັ່ງ, ແຕ່ບໍ່ຮອດ 50% ຂອງບ່ອນນັ່ງທັງໝົດ ຊຶ່ງມີ 343 ບ່ອນນັ່ງ ຕ້ອງໄດ້ຮ່ວມກັບພັກອື່ນ ເພື່ອຈັດຕັ້ງລັດຖະບານ ຊຶ່ງນະໂຍບາຍຫຼັກຂອງການຫາສຽງຄັ້ງນີ້ ຂອງທ່ານ ຄານີ ແມ່ນຕໍ່ຕ້ານທ່ານ ໂດນັນ ທຣຳ (Donald Trump). ທ່ານ ຄານີ ໄດ້ຂຶ້ນເວທີ ເພື່ອປະກາດໄຊຊະນະຂອງຕົນ ແລະ ໄດ້ກ່າວວ່າການາດາ ບໍ່ຄວນລືມການທໍລະຍົດຂອງ ສ. ອາເມຣິກາ ແລະ ທ່ານ ທຣຳ ຈະບໍ່ສາມາດທຳລາຍແຄນນາດາໄດ້. ທ່ານຍັງໃຫ້ຄຳໝັ້ນສັນຍາວ່າ ລັດຖະບານຂອງທ່ານຈະເຮັດວຽກເພື່ອທຸກຄົນ. ພາຍຫຼັງບັນຫາອັດຕາພາສີນຳເຂົ້າຂອງ ສ. ອາເມຣິກາ ລວມທັງຄຳຂູ່ ຂອງ ທ່ານ ທຣຳ ທີ່ຈະເອົາການາດາເຂົ້າເປັນລັດທີ 51, ໄດ້ກາຍເປັນບັນຫາສຳຄັນທີ່ຈະມີນ້ຳໜັກຕັດສິນໃນການເລືອກຕັ້ງຄັ້ງນີ້.

**ການເມືອງເຢຍລະມັນ:** ວັນທີ 05 ພຶດສະພາ 2025, ກຸ່ມພັກສະຫະພັນ (CDU/CSU) ແລະ ພັກສັງຄົມປະຊາທິປະໄຕ (SPD) ຊຶ່ງເປັນພັກຂອງລັດຖະບານຊຸດເກົ່າ ໄດ້ບັນລຸຂໍ້ຕົກລົງການສ້າງຕັ້ງລັດຖະບານປະສົມຢ່າງເປັນທາງການ ເຮັດໃຫ້ທັງສອງພັກມີສະມາຊິກສະພາຮ່ວມກັນ ທັງໝົດ 328 ໃນຈຳນວນ 630 ບ່ອນນັ່ງ (ພາຍຫຼັງການເລືອກຕັ້ງໃນເດືອນ ກຸມພາ 2025 ຜ່ານມາ ບໍ່ມີພັກໃດໄດ້ບ່ອນນັ່ງພຽງພໍ ເພື່ອຈັດຕັ້ງລັດຖະບານ) ເຊິ່ງເຫັນດີໃຫ້ທ່ານ ຟຣີດຣິກ ເມີດຊ໌, ຜູ້ນຳພັກ CDU/CSU ເປັນນາຍົກລັດຖະມົນຕີຄົນໃໝ່ ຂອງເຢຍລະມັນ. ເຫດການຄັ້ງນີ້, ຖືເປັນຄວາມສຳເລັດຂອງພັກ CDU/CSU ໃນການກັບມາຄອງອຳນາດອີກຄັ້ງ ພາຍຫຼັງການປະລາໄຊໃຫ້ແກ່ພັກ SPD ໃນການເລືອກຕັ້ງປີ 2021 ຜ່ານມາ ແລະ ເປັນການຮ່ວມລັດຖະບານ ຂອງສອງຝ່າຍອີກຄັ້ງ ທີ່ເອີ້ນວ່າ "ພັນທະມິດໃຫຍ່" ແລະ ພ້ອມກັນຈະແກ້ໄຂບັນຫາເສດຖະກິດ, ເພີ່ມການໃຊ້ຈ່າຍດ້ານວຽກງານປ້ອງກັນປະເທດ, ປັບປຸງໂຄງລ່າງພື້ນຖານ ແລະ ຍຶດໝັ້ນຈຸດຢືນ ກ່ຽວກັບ ບັນຫາຊາວອົບພະຍົບຢ່າງໜັກແໜ້ນ.

**ການເມືອງປ໋ອກຕຸຍການ:** ວັນທີ 18 ພຶດສະພາ 2025, ປອກຕຸຍການ ໄດ້ມີການຈັດການເລືອກຕັ້ງລັດຖະສະພາ ຄັ້ງທີ 17 ຂຶ້ນກ່ອນກຳນົດ ເພື່ອເປັນການຄັດເລືອກເອົາສະມາຊິກສະພາ ຈຳນວນ 230 ບ່ອນນັ່ງ, ພາຍຫຼັງ ທ່ານ ລຸຍ ມອນເຕເນໂກຣ (Luis Montenegro), ຮັກສາການນາຍົກລັດຖະມົນຕີ ຈາກພັກສັງຄົມປະຊາທິປະໄຕ (ພັກກຳອຳນາດ ປັດຈຸບັນ) ປະລາໄຊຈາກການລົງຄະແນນສຽງໄວ້ວາງໃຈ ຈາກຂໍ້ຫາຄວາມຂັດແຍ່ງທາງຜົນປະໂຫຍດ ທີ່ກ່ຽວຂ້ອງກັບ ທຸລະກິດຄອບຄົວ ໃນວັນທີ 11 ມີນາ2025 ຜ່ານມາ. ການເລືອກຕັ້ງ ຄັ້ງນີ້, ມີຜູ້ອອກມາໃຊ້ສິດທັງໝົດ 48,2%. ຜົນການເລືອກຕັ້ງ ເຫັນວ່າ: ພັນທະມິດປະຊາທິປະໄຕ (AD) ເປັນພັກການເມືອງກາງຂວາ ໄດ້ຮັບໄຊຊະນະ ດ້ວຍຄະແນນ 32,7 %; ພັກສັງຄົມນິຍົມ (PS), ເປັນພັກຝ່າຍຊ້າຍ ຍາດໄດ້ 23,4%; ພັກພຽງພໍ (Chega), ເປັນພັກອະນຸລັກນິຍົມຂວາຈັດ ໄດ້ 22,6 %; ພັກລິເລີ່ມເສລີພາບ (IL) ໄດ້ 5,5%; ພັກຂະບວນກ້າວໜ້າ (LIVRE) ໄດ້ 4,2 %; ພັກກອມມູນິດປອກຕຸຍການ (PCP) ໄດ້ 3% ແລະ ພັກອື່ນໆ. ສິ່ງທ້າທາຍຂອງພັນທະມິດ

ປະຊາທິປະໄຕ ແມ່ນການສ້າງຕັ້ງ ລັດຖະບານປະສົມ ເພື່ອໃຫ້ໄດ້ 116 ຈາກ 230 ບ່ອນນັ່ງ ໃນສະພາ, ແຕ່ ທ່ານ ລຸຍ ມອນເຕເນໂກຣ ໄດ້ອອກມາຢືນຢັນວ່າ ພັກສັງຄົມປະຊາທິປະໄຕ ຈະບໍ່ຮ່ວມລັດຖະບານ ກັບ ພັກ Chega ແລະ ຖ້າ ເຈລະຈາກັບບັນດາພັກນ້ອຍ ກໍບໍ່ສາມາດຍາດໄດ້ບ່ອນນັ່ງພຽງພໍໃນສະພາ.

**ການເມືອງຣູມານີ:** ວັນທີ 04 ພຶດສະພາ 2025, ຣູມານີ ໄດ້ຈັດການເລືອກຕັ້ງປະທານາທິບໍດີຮອບທຳອິດຂຶ້ນ ຢ່າງເປັນທາງການ ຫຼັງຈາກການເລືອກຕັ້ງປີ 2024 ຖືກຍົກເລີກ ຍ້ອນຖືກແຊກແຊງຈາກພາຍນອກ. ການເລືອກຕັ້ງ ຄັ້ງນີ້ ມີຜູ້ລົງສະໝັກເລືອກຕັ້ງທັງໝົດ 11 ທ່ານ ແລະ ຜ່ານການຄັດເລືອກຈາກຄະນະກຳມະການເລືອກຕັ້ງສູນກາງ 5 ທ່ານ, ມີປະຊາຊົນ ໄປລົງຄະແນນສຽງທັງໝົດ 53,21% ຫຼື 9,571,740 ຄົນ ໃນຈຳນວນປະຊາກອນທັງໝົດ 17,988,031 ຄົນ ໃນ 47 ເຂດການເລືອກຕັ້ງ. ຜົນການເລືອກຕັ້ງ ເຫັນວ່າ: ທ່ານ ຈໍເຈຍ ຊີມີອອນ, ຜູ້ນຳພັກ ພັນທະ ມິດເພື່ອສະຫະພາບໂຣມານີ (AUR), ມີຈຸດຢືນຊາດນິຍົມ, ຕໍ່ຕ້ານອີຢູ ແລະ ນາໂຕ, ໄດ້ຮັບຄວາມນິຍົມເປັນອັນດັບ ໜຶ່ງ ດ້ວຍຄະແນນສຽງ 40.5%; ທ່ານ ນິກູຊໍ ດັນ, ເຈົ້າຄອງນະຄອນຫຼວງບູຄາເຣສ, ຜູ້ສະໝັກອິດສະຫຼະ, ມີ ນະໂຍບາຍເປັນກາງ ສະໜັບສະໜູນອີຢູ ໄດ້ຮັບຄະແນນສຽງ 20,99%; ທ່ານ ກຣິນ ອານໂຕນນີສະກູ, ອະດີດປະທານ ສະພາສູງ ແລະ ອະດີດຫົວໜ້າພັກເສລີນິຍົມແຫ່ງຊາດ (PNL) ໄດ້ 20.09%; ທ່ານ ວິກເຕີ ປອນຕາ, ອະດີດ ນາຍົກລັດຖະມົນຕີ ໄດ້ 13.05% ແລະ ທ່ານ ນາງ ອີເລນາ ລາສະໂກນີ, ເຈົ້າເມືອງແຄມປູລັງ ໄດ້ 2.67%. ຜົນການ ເລືອກຕັ້ງບໍ່ມີຜູ້ສະໝັກທ່ານໃດ ສາມາດຍາດໄດ້ຄະແນນເກີນ 50%. ສະນັ້ນ, ໃນວັນທີ 18 ພຶດສະພາ 2025, ຣູມານີ ໄດ້ຈັດການເລືອກຕັ້ງປະທານາທິບໍດີ ຮອບທີ II ຂຶ້ນ ລະຫວ່າງ ທ່ານ ຊີມີອອນ ແລະ ທ່ານ ດັນ. ໃນການເລືອກຕັ້ງມີ ຜູ້ມາໃຊ້ສິດ ຈຳນວນ 11,64 ລ້ານຄົນ ຫຼາຍກວ່າການເລືອກຕັ້ງຮອບທຳອິດ ເຖິງ 1,6 ລ້ານຄົນ. ຜົນການເລືອກຕັ້ງ ແມ່ນ ທ່ານ ດັນ ໄດ້ຮັບໄຊຊະນະ ດ້ວຍຄະແນນສຽງ 54,17% ; ສ່ວນ ທ່ານ ຊີມີອອນ ໄດ້ຄະແນນສຽງ 45,83%. ຈາກຜົນການເລືອກຕັ້ງດັ່ງກ່າວ ເຮັດໃຫ້ ທ່ານ ດັນ ດຳລົງຕຳແໜ່ງເປັນ ປະທານາທິບໍດີ ຄົນທີ 07 ຂອງຣູມານີ.

**ການເລືອກຕັ້ງໂປໂລຍ:** ວັນທີ 18 ພຶດສະພາ 2025, ສ. ໂປໂລຍ ໄດ້ຈັດການເລືອກຕັ້ງປະທານາທິບໍດີຂຶ້ນ ເພື່ອ ເລືອກເອົາປະທານາທິບໍດີ ຄົນທີ 07 ຂອງ ສ. ໂປໂລຍ ກ່ອນການໝົດວາລະຂອງ ທ່ານ ອັງເດຣ ດູດາ (Andrzej Duda), ປະທານາທິບໍດີໂປໂລຍ ຄົນປັດຈຸບັນ ໃນວັນທີ 06 ສິງຫາ 2025 ທີ່ຈະມາເຖິງນີ້. ໃນການເລືອກຕັ້ງ ຄັ້ງນີ້ ມີ ຜູ້ລົງສະໝັກຮັບເລືອກຕັ້ງທັງໝົດ 13 ທ່ານ, ສັງກັດພັກການເມືອງ 07 ທ່ານ, ສ່ວນອີກ 06 ທ່ານ ແມ່ນຜູ້ສະໝັກ ອິດສະຫຼະ. ສຳລັບ ທ່ານ ອັງເດຣ ດູດາ ແມ່ນບໍ່ມີສິດລົງເລືອກຕັ້ງໃນເທື່ອນີ້ ເນື່ອງຈາກ ທ່ານ ເຄີຍດຳລົງຕຳແໜ່ງ ປະທານາທິບໍດີໂປໂລຍ 02 ສະໄໝຕິດຕໍ່ກັນ (ສະໄໝທີ 01 ແຕ່ປີ 2015-2019 ແລະ ສະໄໝທີ 02 ແຕ່ປີ 2020 - ປັດຈຸບັນ) ການເລືອກຕັ້ງ ຄັ້ງນີ້ ມີປະຊາຊົນ ຜູ້ມີສິດປ່ອນບັດທັງໝົດ 29,25 ລ້ານຄົນ ຂອງຈຳນວນປະຊາກອນ ທັງ ໝົດ 36,69 ລ້ານຄົນ ແລະ ມີໜ່ວຍປ່ອນບັດທັງໝົດ 32.000 ໜ່ວຍ ຢູ່ພາຍໃນ ແລະ ຕ່າງປະເທດ. ຜົນການເລືອກ ຕັ້ງ ດັ່ງນີ້: 1) ທ່ານ ຣາຟາ ຄາຊີເມີຊ໌ ທຣາຊ໌ຄາວສ໌ກີ (Rafal Kazimierz Trzaskowski), ເຈົ້າຄອງນະຄອນຫຼວງ Warsaw, ສັງກັດແນວຮ່ວມພົນລະເມືອງ (Civic Coalition) ຊຶ່ງເປັນແນວຮ່ວມກຳອຳນາດ ປະກອບມີ 03 ພັກ ການເມືອງ ໄດ້ຮັບໄຊຊະນະດ້ວຍຄະແນນສຽງ 31,36%. 2) ທ່ານ ຄາຣໍ ທາດິອຸດຊ໌ ນາລ໋ອກກີ(Karol Tadeusz Nawrocki), ຜູ້ສະໝັກເອກະລາດ ແຕ່ໄດ້ຮັບການສະໜັບສະໜູນຈາກ ພັກຝ່າຍຄ້ານ ກໍຄື ພັກກົດໝາຍ ແລະ ຄວາມ ຍຸຕິທຳ ໄດ້ 29,54%. 3) ທ່ານ ຊາຣາໂວເມີຍ ເຈີຊີ ເມັນເຊັນ (Slawomir Jerzy Mentzen), ສັງກັດພັກສະຫະພັນ ແຫ່ງເສລີພາບ ແລະ ອິດສະຫຼະພາບ ຫຼື Confederation ໄດ້ 14,81%. ສ່ວນຜູ້ລົງສະໝັກທ່ານອື່ນ ແມ່ນໄດ້ ຄະແນນບໍ່ຮອດ 07%. ເນື່ອງຈາກບໍ່ມີຜູ້ສະໝັກທ່ານໃດ ໄດ້ຄະແນນເກີນ 50% ຂຶ້ນໄປ, ຈຶ່ງມີການເລືອກຕັ້ງຮອບທີ II ທີ່ຈະຈັດຂຶ້ນໃນວັນທີ 01 ມິຖຸນາ 2025 ນີ້.

**3) ພາກພື້ນຕາເວັນອອກກາງ**

ນັບແຕ່ຄະນະຄວາມໝັ້ນຄົງຂອງ ອິດສະຣາແອນ ລວມທັງນາຍົກລັດຖະມົນຕີ ທ່ານ ເບັນຈາມິນ ເນທັນຢາຮູ ມີມະຕິຕົກລົງຈະຢຶດ ເຂດກາຊາ ທັງໝົດ ໃນວັນທີ 05 ພຶດສະພາ 2025 ຜ່ານມາ ໄດ້ເຮັດໃຫ້ສະຖານະການໃນ ເຂດ ກາຊາ ເຄັ່ງຕຶງຂຶ້ນຍ້ອນ ອິດສະຣາແອນ ໂຈມຕີທາງອາກາດ ແລະ ບຸກພາກພື້ນດິນທົ່ວເຂດກາຊາ ເຮັດໃຫ້ປະຊາຊົນ ປາແລັດສະຕິນ ເສຍຊີວິດເກືອບ 100 ຄົນ ໃນແຕ່ລະວັນ. ປັດຈຸບັນ, ອິດສະຣາແອນ ສາມາດຍຶດເຂດກາຊາໄດ້ 77% ຂອງພື້ນທີ່ທັງໝົດ. ແຕ່ຍ້ອນບັນດາປະເທດພັນທະມິດ ລວມທັງ ຝຣັ່ງ, ອັງກິດ, ການາດາ ແລະ ອາເມຣິກາ ໄດ້ຂູ່ຈະ ຂວ້ຳບາດ ອິດສະຣາແອນ. ສະນັ້ນ, ໃນວັນທີ 20 ພຶດສະພາ 2025, ອິດສະຣາແອນ ໄດ້ອະນຸຍາດໃຫ້ລົດບັນທຸກຄວາມ ຊ່ວຍເຫຼືອດ້ານມະນຸດສະທຳ ເຂົ້າໃນເຂດກາຊາບາງສ່ວນ (90 ຄັນ ຈາກທີ່ຕົກລົງວ່າຈະໃຫ້ເຂົ້າເຖິງ 100 ຄັນຕໍ່ວັນ),

ແຕ່ການຊ່ວຍເຫຼືອດັ່ງກ່າວ ບໍ່ພຽງພໍຕໍ່ສະພາບຄວາມຂາດແຄນ ປະຊາຊົນປະແລັດຕິນ ຕ້ອງໄດ້ຍາດຊີງອາຫານ ເຮັດໃຫ້ມີຄວາມແອອັດ ພາເກີດເຫດການຢຽບກັນຕາຍ 04 ຄົນ. ນອກນີ້, ອິດສະຣາແອນ ຍັງໄດ້ຍິງ ປະຊາຊົນ ເສຍຊີວິດ 01 ຄົນ; ບາດເຈັບ 48 ຄົນ ໃນເວລາທີ່ ປະຊາຊົນ ຍາດຊີງເຄື່ອງຊ່ວຍເຫຼືອ ຊຶ່ງເປັນການກະທຳ ທີ່ໄຮ້ມະນຸດສະທຳຢ່າງຮ້າຍແຮງ. ຕໍ່ສະຖານະການທີ່ນັບມື້ຮຸນແຮງຂຶ້ນ ປະຊາຄົມໂລກໄດ້ປະນາມ ອິດສະຣາແອນ ວ່າ ເປັນການກະທຳທີ່ເປັນການຂ້າລ້າງເຜົ່າພັນຄົນປາແລັດສະຕິນ ແລະ ສະແດງການສະໜັບສະໜູນ ຄົນປະແລັດສະຕິນ. ຊຶ່ງໃນວັນທີ 22 ພຶດສະພາ 2025 ຜ່ານມາ ໄດ້ເກີດເຫດຍິງນັກການທູດອິດສະຣາແອນ 02 ທ່ານ ເສຍຊີວິດ ໃນນະຄອນຫຼວງ ວໍຊິງຕັນ ດີຊີ, ສ. ອາເມຣິກາ ໃນຂະນະທີ່ທັງສອງທ່ານ ເຂົ້າຮ່ວມງານວາງສະແດງວັດທະນະທຳ ແລະ ສິລະປະຂອງຊາວຢິວ, ຊຶ່ງປັດຈຸບັນ ສາມາດຈັບຕົວຜູ້ກໍ່ເຫດໄດ້ແລ້ວ, ທ່ານ ທຣຳ ກໍໄດ້ປະນາມຕໍ່ເຫດການດັ່ງກ່າວ ແລະ ຈະລົງໂທດຕໍ່ຜູ້ກະທຳຜິດຢ່າງເໝາະສົມ. ນອກຈາກນັ້ນ, ອິດສະຣາແອນ ຍັງໄດ້ສັງຫານ ທ່ານ ໂມຮາມິດ ຊິນວາ, ຜູ້ນຳສູງສຸດຂອງ ກຸ່ມຮາມາສ ເສຍຊວິດ ໃນລະຫວ່າງ ການໂຈມຕີທາງຕອນໃຕ້ຂອງ ເຂດກາຊາ ໃນວັນທີ 27 ພຶດສະພາ 2025 ຜ່ານມາ, ເຮັດໃຫ້ ກຸ່ມຮາມາສ ໄດ້ມີການຕອບໂຕ້ຄືນ ອິດສະຣາແອນ ຢ່າງໜັກໜ່ວງ. ກອງທັບອາກາດອິດສະລາແອນ ຍັງໄດ້ໂຈມຕີສະໜາມບິນ ຊານາ ຂອງ ເຢເມນ ໂດຍໄດ້ທຳລາຍເຮືອບິນລຳສຸດທ້າຍຂອງ ກຳລັງປະກອບອາວຸດຮູຕີ ທີ່ຍັງໃຊ້ຢູ່, ສ່ວນເຮືອບິນລຳອື່ນໆ ລ້ວນແຕ່ຖືກກອງທະຫານອິດສະຣາແອນ ທຳລາຍ ໃນການໂຈມຕີສະໜາມບິນ ໃນວັນທີ 06 ພຶດສະພາ 2025. ສ່ວນກຸ່ມ  ເຢເມນ ກໍໄດ້ໂຈມຕີສະໜາມບິນຂອງ ອິດສະຣາແອນ ເຮັດໃຫ້ປະຊາຊົນອິດສະຣາແອນ ຕ້ອງລີ້ບໜີໄພ. ສັງລວມແລ້ວ, ສະຖານະການໃນກາຊາ ຍັງບໍ່ມີທ່າທີຈະຜ່ອນຄາຍລົງ ຈົນກວ່າອິດສະຣາແອນ ຈະສາມາດຢຶດເຂດກາຊາໄດ້ຕາມເປົ້າໝາຍ.

**ປະທານາທິບໍດີ ສ. ອາເມຣິກາ ຢ້ຽມຢາມບັນດາ ປະເທດຕາເວັນອອກາງ**: ວັນທີ 13-16 ພຶດສະພາ 2025, ທ່ານ ທຣຳ, ປະທານາທິບໍດີ ສ. ອາເມຣິກາ ຢ້ຽມຢາມ 03 ປະເທດຕາເວັນອອກກາງ, ວັນທີ 13 ພຶດສະພາ 2025, ຢ້ຽມຢາມ ປະເທດ ຊາອຸດິດ ອາຣາບີ, ໄດ້ລົງນາມໃນຂໍ້ຕົກລົງຊື້ອາວຸດ ຈາກ ສ. ອາເມຣິກາ ມູນຄ່າ 142 ຕື້ໂດລາສະຫະລັດ. ການນຳສອງປະເທດ ຍັງໄດ້ລົງນາມໃນ ບັນດາຂໍ້ຕົກລົງ ກ່ຽວກັບ ການຮ່ວມມືດ້ານໝັ້ນຄົງ, ການສືບຂ່າວລັບ, ເຕັກໂນໂລຊີ ແລະ ພະລັງງານ ລວມມູນຄ່າການລົງທຶນ ທີ່ໄດ້ລົງນາມ ໃນຄັ້ງນີ້ ມີມູນຄ່າເຖິງ 600 ຕື້ໂດລາສະຫະລັດ. ໃນວັນດຽວກັນ, ທ່ານ ທຣຳ ໄດ້ພົບປະກັບທ່ານ ອາວ ຊາຣາ (al-shara), ຮັກສາການປະທານາທິບໍດີ ຊີຣີ ຕາມການສະເໜີຂອງ ເຈົ້າຊາຍ ຊາອຸດິດ ອາຣາບີ ແລະ ເຂົ້າຮ່ວມພົບປະຜ່ານວິດີໂອທາງໄກ ຂອງ ປະທານາທິບໍດີ ຕວັກກີ ໂດຍ ທ່ານ ທຣຳ ໄດ້ກ່າວວ່າ ຈະຍົກເລີກມາດຕະການຂວ່ຳບາດທັງໝົດ ຂອງ ສ. ອາເມຣິກາ ຕໍ່ ຊີຣີ ແລະ ກ່າວວ່າ ເຖິງເວລາແລ້ວທີ່ ຊີຣີ ຈະກັບມາຮຸ່ງເຮືອງ ແຕ່ ຊີຣີ ຕ້ອງກັບມາສ້າງການພົວພັນປົກກະຕິ ກັບ ອິດສະຣາແອນ ແລະ ຕ້ອງໃຫ້ກອງທັບຂອງ ຣັດເຊຍ ແລະ ອີຣານ ອອກຈາກ ຊີຣີ ແລະ ຕ້ອງຂັບໄລ່ປະຊາຊົນ ປະແລັດສະຕິນ ອອກຈາກ ຊີຣີ. ໃນວັນທີ 14 ພຶດສະພາ 2025, ທ່ານ ທຣຳ ໄດ້ເດີນທາງຕໍ່ໄປທີ່ປະເທດ ກາຕາ ຊຶ່ງ ກາຕາ ຈະຊື້ເຮືອບິນໂບອິ້ງ ຈາກ ສ. ອາເມຣິກາ ຈຳນວນ 210 ລຳ ລວມມູນຄ່າ 96 ຕື້ໂດລາສະຫະລັດ ສັນຍາຊື້ ເຮືອບິນຊະນິດດັ່ງກ່າວນີ້ມີມູນຄ່າຫຼາຍທີ່ສຸດ. ຂະນະດຽວກັນ, ກາຕາ ໄດ້ມອບເຮືອບິນ ໂບອິ້ງ 747-8Jet ທີ່ມີມູນຄ່າ 400 ລ້ານໂດລາ ໃຫ້ແກ່ທ່ານ ທຣຳ ເພື່ອເປັນຂອງຂວັນສຳລັບການຢ້ຽມຢາມຄັ້ງນີ້. ໃນວັນທີ 15 ພຶດສະພາ 2025. ທ່ານ ທຣຳ ໄດ້ຢ້ຽມຢາມ ສະຫະລັດອາຣັບເອມິເຣດ ໄດ້ລົງນາມໃນຂໍ້ຕົກລົງ ກ່ຽວກັບ ທຸລະກິດ ປັນຍາປະດິດ (AI) ມູນຄ່າປະມານ 1.4 ພັນຕື້ໂດລາ.

## I. ການເຄື່ອນໄຫວຂອງການນຳການຂັ້ນສູງຂອງພັກ ປະຊາຊົນ ປະຕິວັດລາວ

### 1) ພິທີລະນຶກ ວັນເກີດ ປະທານ ໂຮ່ຈີມິນ ຄົບຮອບ 135 ປີ





ວັນທີ 20 ພຶດສະພາ 2025, ຢູ່ທີ່ສຳນັກງານສູນກາງພັກ, ຄະນະບໍລິຫານງານສູນກາງພັກ ໄດ້ຈັດຕັ້ງການລະນຶກວັນເກີດ ຂອງ ປະທານ ໂຮ່ຈີມິນ ຄົບຮອບ 135 ປີ (19/5/1890-19/5/2025), ໃນໂອກາດນີ້, ໄດ້ຊົມຮູບເງົາສາລະຄະດີ ກ່ຽວກັບຊີວິດ ແລະ ພາລະກິດປະຕິວັດ ເພື່ອສະແດງຄວາມຮູ້ບຸນຄຸນ ປະທານ ໂຮ່ຈີມິນ, ຜູ້ນຳທີ່ຍິ່ງໃຫຍ່ຂອງ ປະຊາຊົນຫວຽດນາມອ້າຍນ້ອງ, ທັງເປັນເພື່ອນສະຫາຍ ທີ່ໃກ້ຊິດ ແລະ ສະໜິດສະໜົມທີ່ສຸດຂອງພັກ, ລັດ ແລະ ປະຊາຊົນລາວ. ຈາກນັ້ນ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ໄດ້ມີຄຳເຫັນຕື່ມ ວ່າ : ປະທານ ໂຮ່ຈີມິນ ແມ່ນຜູ້ນຳທີ່ຍິ່ງໃຫຍ່ຂອງ ພັກ ແລະ ປະຊາຊົນຫວຽດນາມ, ເປັນຜູ້ກໍ່ຕັ້ງພັກກອມມູນິດອິນດູຈີນ ທີ່ເປັນຕົ້ນກຳເນີດຂອງ ພັກກອມມູນິດຫວຽດນາມ, ພັກປະຊາຊົນປະຕິວັດລາວ ແລະ ພັກປະຊາຊົນກຳປູເຈຍ ໃນປັດຈຸບັນ. ໃນສະພາບການຂອງໂລກ ແຕ່ລະຍຸກ, ແຕ່ລະສະຕະວັດ ຜ່ານມາມີຫຼາຍເຫດການປະຫວັດສາດ, ມີຫຼາຍນັກປາດອາຈານ, ນັກວິທະຍາສາດ, ນັກຄົ້ນຄວ້າ, ນັກບຸກເບີກທາງດ້ານວິທະຍາສາດສັງຄົມວິທະຍາສາດທຳມະຊາດ ເກີດຂຶ້ນ ຈົນມາຮອດປັດຈຸບັນແມ່ນ 4.0 ແຕ່ບຸກຄົນທີ່ຊອກສະແຫວງຫາ ເພື່ອປ່ຽນແປງລະບອບການປົກຄອງ, ຊອກເສັ້ນທາງປະຕິວັດ ເພື່ອຕໍ່ສູ້ເອົາຄວາມເປັນເອກະລາດ ແລະ ການຫຼຸດພົ້ນອອກຈາກການກົດຂີ່ຂູດຮີດໃຫ້ແກ່ມວນມະນຸດ, ຊອກຫາເສັ້ນທາງແຫ່ງການປ່ຽນແປງທາງດ້ານການເມືອງນັ້ນ ແລະ ອາດເວົ້າໄດ້ວ່າ ສະຕະວັດໜຶ່ງ ເກີດຂຶ້ນບໍ່ພຽງເທົ່າໃດຄົນ ເຊັ່ນ: ມາກ, ອັງແກນ, ເລນິນ ແລະ ໃນນັ້ນ ມີ ປະທານ ໂຮ່ຈີມິນ.

ເມື່ອຫວນຄືນເຖິງຊີວິດ ແລະ ພາລະກຳອັນຍິ່ງໃຫຍ່ຂອງ ປະທານ ໂຮ່ຈີມິນ ໃນໄລຍະທີ່ປະເທດຊາດຕົກຢູ່ໃນການປົກຄອງຂອງພວກລ່າເມືອງຂຶ້ນນັ້ນ, ປະທານ ໂຮ່ຈີມິນ ໄດ້ຍອມເສຍສະຫຼະທຸກສິ່ງຢ່າງ ອອກຈາກບ້ານເກີດເມືອງນອນ ເພື່ອໄປຊອກຫາເສັ້ນທາງກູ້ຊາດ ໂດຍຊອກເຫັນ ລັດທິມາກ-ເລນິນ ແລະ ນຳມາໝູນໃຊ້ຢູ່ອິນດູຈີນ ຢ່າງປະດິດສ້າງ, ການກຳເນີດຂອງພັກກອມມູນິດອິນດູຈີນ ໃນປີ 1930 ທີ່ຖືເປັນພາລະກຳອັນຍິ່ງໃຫຍ່ຂອງ ປະທານ ໂຮ່ຈີມິນ ໄດ້ສ້າງຂຶ້ນມາ ເພື່ອຢາກໃຫ້ມີຂະບວນການຕໍ່ສູ້ປະຕິວັດ, ຂັບໄລ່ພວກລ່າເມືອງຂຶ້ນ ອອກຈາກອິນດູຈີນ ແລະ ປົດປ່ອຍປະຊາຊົນຜູ້ອອກແຮງງານ ທີ່ຖືກກົດຂີ່ຂູດຮີດ ແລະ ກຳລັງຈົມຢູ່ໃນຄວາມມືດມົນ ຢູ່ໃນລະບອບການປົກຄອງເກົ່ານັ້ນ ໃຫ້ມີອິດສະຫຼະພາບ, ມີເອກະລາດ, ມີຄວາມສະເໝີພາບ ແລະ ເປັນພົນລະເມືອງ ທີ່ເຕັມໄປດ້ວຍສັກສີຂອງ ສາມປະເທດອິນດູຈີນ, ເຊິ່ງຖືເປັນຄວາມມຸ່ງມາດປາຖະໜາອັນສູງສົ່ງຂອງ ປະທານ ໂຮ່ຈີມິນ ໂດຍມີຄຳເວົ້າອະມະຕະຂອງເພິ່ນ ເວົ້າວ່າ ***"ບໍ່ມີສິ່ງໃດ ປະເສີດກວ່າ ເອກະລາດ ແລະ ເສລີພາບ"*** ທີ່ນັກປະຕິວັດຫວຽດນາມ, ນັກປະຕິວັດລາວ ແລະ ນັກປະຕິວັດກຳປູເຈຍ ໄດ້ຮ່ວມມື, ຮ່ວມແຮງ ແລະ ຮ່ວມໃຈ ເປັນຈິດໜຶ່ງໃຈດຽວກັນ ຕໍ່ສູ້ເພື່ອໃຫ້ໄດ້ມາເຊິ່ງຄວາມມຸ່ງມາດປາຖະໜາຂອງ ປະທານ ໂຮ່ຈີມິນນັ້ນ ໄດ້ຮັບຜົນສຳເລັດອັນໃຫຍ່ຫຼວງ.

ປະທານ ໂຮ່ຈີມິນ ເປັນບຸກຄົນພິເສດ ທີ່ມີການດຳລົງຊີວິດແບບງ່າຍດາຍ, ຮ່ວມກັບປະຊາຊົນ ແລະ ຮ່ວມກັບກອງທັບ, ມີຄວາມປະຢັດ, ສັດທ່ຽງ, ຊື່ສັດບໍລິສຸດ, ເອົາຜົນປະໂຫຍດຂອງປະເທດ ຊາດ, ຂອງປະຊາຊົນ ຢູ່ ເໜືອກວ່າສິ່ງໃດໆ, ເພິ່ນໄດ້ເສຍສະຫຼະທຸກສິ່ງທຸກຢ່າງ ເພື່ອປະຕິບັດພາລະກິດຂອງປະເທດຊາດ ແລະ ໄດ້ເຮັດສຳເລັດ, ນຳເອົາຜົນສຳເລັດອັນຍິ່ງໃຫຍ່ ມາສູ່ປະຊາຊົນຫວຽດນາມ ແລະ ປະຊາຊົນສາມຊາດອິນດູຈີນ ຂອງພວກເຮົາ. ຂ້າພະເຈົ້າ ຄິດວ່າ ຄວາມເວົ້າອັນອະມະຕະຂອງ ປະທານ ໂຮ່ ທີ່ໄດ້ກະຕຸກຊຸກຍູ້ຈິດໃຈຂອງນັກລົບປະຕິວັດ ກໍຄື ປະຊາຊົນຫວຽດນາມ ນັ້ນວ່າ "***ຊ່ວຍເພື່ອນ ຄືກັບຊ່ວຍຕົວເອງ***" ອັນນີ້ໄດ້ກາຍເປັນຄວາມເປັນຈິງຂຶ້ນມາ, ການທີ່ ພັກກອມມູນິດຫວຽດນາມ,

ປະຊາຊົນຫວຽດນາມ, ນັກຮົບຫວຽດນາມ ໄດ້ເຂົ້າມາຊ່ວຍເຫຼືອ ການປະຕິວັດລາວ, ສະໜັບສະໜູນການປະຕິວັດລາວ, ຮ່ວມຄຽງບ່າຄຽງໄຫຼ່ກັບ ປະຊາຊົນລາວ ແລະ ນັກຮົບລາວ ຕໍ່ສູ້ເພື່ອປົດປ່ອຍຊາດເຮົາ ດ້ວຍຄວາມເສຍສະຫຼະ ແລະ ບໍ່ຄຳນຶງເຖິງຄວາມຫຍຸ້ງຍາກ ກັນດານໃດໆ ແລະ ການຊ່ວຍເຫຼືອທີ່ທັນການ ແລະ ບໍ່ມີເງື່ອນໄຂໃດໆ ແມ່ນເປັນການຊ່ວຍເຫຼືອອັນຍິ່ງໃຫຍ່, ຄວາມເສຍສະຫຼະຂອງນັກຮົບຫວຽດນາມ ທີ່ເອົາເລືອດທາແຜ່ນດິນລາວເຮົາບໍ່ຈັກວ່າເທົ່າໃດຄົນນັ້ນ ໄດ້ປະກອບສ່ວນສຳຄັນເຂົ້າໃນການປະຕິວັດ ປົດປ່ອຍຊາດຂອງລາວເຮົາຕະຫຼອດມາ ແລະ ໃນໄລຍະທີ່ພວກເຮົາ ດຳເນີນພາລະກິດປົກປັກຮັກສາ ແລະ ພັດທະນາສ້າງສາປະເທດຊາດນີ້ ພັກ, ລັດ, ກອງທັບ ແລະ ປະຊາຊົນຫວຽດນາມ ກໍບໍ່ໄດ້ລົດລະໃນການສືບຕໍ່ສະໜັບສະໜູນຊ່ວຍເຫຼືອ ສປປ ລາວ ພວກເຮົາ ບັນລຸບັນດາເປົ້າໝາຍທີ່ພວກເຮົາວາງໄວ້.

**2) ເລຂາທິການໃຫຍ່, ປະທານປະເທດ ລາວ ເຂົ້າໄວ້ອາໄລເຖິງດວງວິນຍານຂອງ ສະຫາຍ ເຈີ່ນ ດຶກ ເລືອງ.**





ວັນທີ 24 ພຶດສະພາ 2025, ທີ່ ສະຖານເອກອັກຄະລັດຖະທູດ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ນຳພາຄະນະ ໂດຍຕາງໜ້າໃຫ້ ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ, ສະພາແຫ່ງຊາດ, ລັດຖະບານ ແລະ ສູນກາງແນວລາວສ້າງຊາດ ແຫ່ງ ສປປ ລາວ ເຂົ້າຮ່ວມພິທີໄວ້ອາໄລເຖິງດວງວິນຍານຂອງ ສະຫາຍ ເຈີ່ນ ດຶກ ເລືອງ, ອະດີດກຳມະການກົມການເມືອງສູນກາງພັກ, ອະດີດປະທານປະເທດ ແຫ່ງ ສສ ຫວຽດນາມ ທີ່ໄດ້ເຖິງແກ່ມໍລະນະກຳ ໃນວັນທີ 20 ພຶດສະພາ 2025, ພ້ອມທັງໄດ້ຮ່ວມຂຽນປຶ້ມໄວ້ອາໄລ ຊຶ່ງມີເນື້ອໃນດັ່ງລຸ່ມນີ້:

ຂ້າພະເຈົ້າ ຕາງໜ້າຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ, ສະພາແຫ່ງຊາດ, ລັດຖະບານ ແລະ ສູນກາງແນວລາວສ້າງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂໍສະແດງຄວາມອາໄລຮັກ ຢ່າງສຸດຊຶ້ງ ຕໍ່ການຈາກໄປຂອງ ສະຫາຍ ເຈີ່ນ ດຶກ ເລືອງ, ອະດີດກຳມະການກົມການເມືອງສູນກາງພັກ, ອະດີດປະທານປະເທດ ແຫ່ງ ສສ ຫວຽດນາມ, ຜູ້ນຳທີ່ດີເດັ່ນຂອງ ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ, ທັງເປັນເພື່ອນສະຫາຍ ທີ່ໃກ້ຊິດສະໜິດສະໜົມຂອງ ພັກ, ລັດ ແລະ ປະຊາຊົນລາວ.

ພວກເຮົາຂໍສັນລະເສີນ ແລະ ຈົດຈຳຜົນງານ, ຄຸນງາມຄວາມດີຂອງສະຫາຍ ທີ່ໄດ້ປະກອບສ່ວນ ອັນໃຫຍ່ຫຼວງເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ ແລະ ຫວຽດນາມ ຕະຫຼອດມາ.

ໃນທ່າມກາງຄວາມໂສກເສົ້າເສຍດາຍນີ້, ພວກຂ້າພະເຈົ້າ ຂໍສະແດງຄວາມເສົ້າສະຫຼົດໃຈ ແລະ ແບ່ງເບົາຄວາມທຸກໂສກນຳຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ແນວໂຮມປະເທດຊາດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ກໍຄືຄອບຄົວ, ຍາດຕິພີ່ນ້ອງຂອງ ສະຫາຍ ເຈີ່ນ ດຶກ ເລືອງ ມາ ນະໂອກາດນີ້ດ້ວຍ.

## II. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ.

1) ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ່າງໜ້າໃຫ້ພັກປະຊາຊົນ ປະຕິວັດລາວ ລົງນາມ ຮ່ວມກັນກັບຄູ່ຮ່ວມຕຳແໜ່ງຂອງ ພັກຣັດເຊຍເອກະພາບ.



ໃນວັນທີ 08 ພຶດສະພາ 2025, ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຮັບການຕ້ອນຮັບ ແລະ ພົບປະກັບ ສະຫາຍ ອັນເດ ຄຼີມົບ, ກຳມະການກົມການເມືອງຂອງສະພາສູງສຸດ ຂອງພັກຣັດເຊຍເອກະພາບ, ຮອງປະທານຄະນະກຳມາທິການຕ່າງປະເທດຂອງສະພາສະຫະພັນ ແຫ່ງສະຫະພັນຣັດເຊຍ ເນື່ອງໃນໂອກາດຕິດຕາມຄະນະຜູ້ແທນຂັ້ນສູງ ແຫ່ງ ສປປ ລາວ ເດີນທາງເຂົ້າຮ່ວມພິທີສະເຫຼີມສະຫຼອງ ວັນໄຊຊະນະທີ່ຍິ່ງໃຫຍ່ ຂອງປະຊາຊົນໂຊວຽດ ກໍຄື ປະຊາຊົນຣັດເຊຍ ໃນສົງຄາມປ້ອງກັນປິຕຸພູມ ຄົບຮອບ 80 ປີ.

ໃນການພົບປະຄັ້ງນີ້, ສອງຝ່າຍ ໄດ້ສະຫລຸບຕີລາຄາສູງຕໍ່ຜົນສຳເລັດຂອງການພົວພັນຮ່ວມມື ລະຫວ່າງ ພັກປະຊາຊົນລາວ ແລະ ພັກຣັດເຊຍເອກະພາບ ໃນໄລຍະຜ່ານມາ ໃນການຈັດຕັ້ງປະຕິບັດ ອະນຸສັນຍາ ວ່າດ້ວຍ ການເປີດກ້ວາງ ແລະ ລົງເລິກ ການຮ່ວມມືຮອບດ້ານ ໃນສົກປີ 2023-2025. ພ້ອມດຽວກັນນີ້, ສອງຝ່າຍ ຍັງໄດ້ປຶກສາຫາລືກ່ຽວກັບ ແຜນງານການເຄື່ອນໄຫວຂອງສອງພັກໃນຕໍ່ໜ້າ ແລະ ໄດ້ຕາງໜ້າໃຫ້ແກ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ລົງນາມຮ່ວມກັນກັບ ຄູ່ຮ່ວມຕຳແໜ່ງຂອງພັກຣັດເຊຍເອກະພາບ ໃນອະນຸສັນຍາ ວ່າດ້ວຍການເປີດກ້ວາງ ແລະ ລົງເລິກການຮ່ວມມື ລະຫວ່າງ ພັກ ປປ ລາວ ແລະ ພັກຣັດເຊຍເອກະພາບ ໃນສົກປີ 2025-2027 ເພື່ອເປັນບ່ອນອີງທີ່ສຳຄັນໃຫ້ການການເຄື່ອນໄຫວຮ່ວມມື ລະຫວ່າງ ສອງພັກ ໃນລະຍະ 03 ປີ ໃນຕໍ່ໜ້າ.

2) **ຄະນະພັກ-ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າໄວ້ອາໄລເຖິງດວງວິນຍານຂອງ ສະຫາຍ ເຈີນ ດຶກ ເລືອງ.**




ໃນວັນທີ 24 ພຶດສະພາ 2025, ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ພ້ອມດ້ວຍຄະນະ ໄດ້ໄປວາງພວງມາລາ ແລະ ຂຽນປຶ້ມໄຫວ້ອາໄລເຖິງດວງວິນຍານສະຫາຍ ເຈີ່ນດຶກເລືອງ, ອະດີດກຳມະການກົມການເມືອງສູນກາງພັກ, ອະດີດປະທານປະເທດ ແຫ່ງ ສສ ຫວຽດນາມທີ່ ສະຖານເອກອັກຄະລັດຖະທູດ ສສ ຫວຽດນາມ ປະຈຳ ສປປ ລາວ, ເຊິ່ງເນື້ອໃນປຶ້ມໄຫວ້ອາໄລ ມີເນື້ອໃນຂຽນວ່າ: ຄະນະພັກ, ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ຂໍສະແດງຄວາມໂສກເສົ້າເສຍດາຍຢ່າງສຸດຊຶ້ງ ຕໍ່ການຈາກໄປຂອງ ສະຫາຍ ເຈີ່ນດຶກເລືອງ, ອະດີດກຳມະການກົມການເມືອງສູນກາງພັກ, ອະດີດປະທານປະເທດ ແຫ່ງ ສສ ຫວຽດນາມ ເມື່ອວັນທີ 20 ພຶດສະພາ 2025 ຜ່ານມາ.

ສະຫາຍ ເຈີ່ນດຶກເລືອງ ໄດ້ອຸທິດ ແລະ ທຸ້ມເທສະຕິປັນຍາ, ເຫື່ອແຮງຂອງຕົນ ເພື່ອພາລະກິດສ້າງສາພັດທະນາປະເທດຊາດຫວຽດນາມ ໃຫ້ນັບມື້ຈະເລີນເຂັ້ມແຂງ. ຕໍ່ກັບ ສປປ ລາວ ສະຫາຍ ໄດ້ມີການປະກອບສ່ວນສຳຄັນເຂົ້າໃນການເພີ່ມພູນຄູນສ້າງ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລາວ-ຫວຽດນາມ, ຫວຽດນາມ-ລາວ ມາໂດຍຕະຫຼອດ.

ການຈາກໄປຂອງ ສະຫາຍ ເຈີ່ນດຶກເລືອງ ບໍ່ພຽງແຕ່ເປັນການສູນເສຍການນຳຫຼັກແຫຼ່ງຜູ້ດີເດັ່ນຂອງ ພັກ, ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ, ແຕ່ຍັງເປັນການສູນເສຍເພື່ອນມິດສະຫາຍ ທີ່ໃກ້ຊິດທີ່ສຸດຂອງ ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ພວກຂ້າພະເຈົ້າ.

ໃນເວລາເສົ້າໂສກເສຍດາຍນີ້, ພວກຂ້າພະເຈົ້າ ຂໍສະແດງຄວາມອາໄລອາວອນຢ່າງສຸດຊຶ້ງ ແລະ ຂໍແບ່ງເບົາຄວາມທຸກໂສກ ມາຍັງ ພັກ, ລັດ ແລະ ປະຊາຊົນຫວຽດນາມ ກໍຄື ຄອບຄົວ ຂອງ ສະຫາຍ ເຈີ່ນດຶກເລືອງ ມານະໂອກາດນີ້ດ້ວຍ.

### 3) ການທອດຖວາຍຜ້າປ່າສາມັກຄີ ທີ່ ວັດສີນວນ, ຈັງຫວັດຂອນແກ່ນ, ຣາຊະອານາຈັກໄທ




ໃນວັນທີ 25 ພຶດສະພາ 2025 ສະມາຄົມ ລາວ-ໄທ ເພື່ອມິດຕະພາບ ແລະ ສະມາຄົມ ໄທ-ລາວ ເພື່ອມິດຕະພາບ, ຄະນະພົວພັນປະເທດສູນກາງພັກ, ກະຊວງການຕ່າງປະເທດ, ສູນກາງແນວລາວສ້າງຊາດ, ສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ, ບັນດາຄອບຄົວການນຳຈຳນວນໜຶ່ງ, ນັກທຸລະກິດລາວ - ໄທ ແລະ ປະຊາຊົນລາວ ໄດ້ນຳກອງຜ້າປ່າສາມັກຄີ ລາວ -ໄທ ໄປທອດຖວາຍ ຢູ່ວັດສີນວນ, ຈັງຫວັດຂອນແກ່ນ, ປະເທດໄທ ຊຶ່ງຝ່າຍພຣະສົງ ນຳໂດຍຍ່າທ່ານໃຫຍ່ ມະຫາເວດ ມະເສໄນ, ຮອງປະທານສູນກາງອົງການພຸດທະສາໜາສຳພັນ ແຫ່ງ ສປປ ລາວ, ຝ່າຍຄະລາວາດ ນຳໂດຍ ທ່ານ ນາງ ວຽງເງິນ ໄຊຄຳພິທູນ, ພັນລະຍາທ່ານຮອງນາຍົກລັດຖະມົນຕີ, ທ່ານຫຼີ ບຸນຄ້ຳ, ປະທານສະມາຄົມ ລາວ-ໄທ ເພື່ອມິດຕະພາບ, ທ່ານ ຄຳພັນ ອັ່ນລາວັນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປປ ລາວ ປະຈຳຣາຊະອານາຈັກໄທ, ທ່ານ ສົມສັກ ວິໄລທອນ, ກົງສູນໃຫຍ່ ແຫ່ງ ສປປ ລາວເຊິ່ງໃຫ້ກຽດຮັບກອງຜ້າປ່າໂດຍ ພຣະຄຣູ ປະຣິຍັດ ທຳມະໂນສາດ, ເຈົ້າອະທິການວັດສີນວນ ແລະ ໃຫ້ກຽດເຂົ້າຮ່ວມຂອງ ທ່ານ ພັນເທບ ເສົາໂກສົນ, ຮອງຜູ້ວ່າຣາຊະການ ຈັງຫວັດຂອນແກ່ນ, ທ່ານ ກຽດຕິຄຸນ ຊາດປະເສີດ, ປະທານ

ສະມາຄົມ ໄທ - ລາວ ເພື່ອມິດຕະພາບ, ທ່ານ ນາງ ຈີຣັດສະຍາ ພິຣານິນ, ອັກຄະຣາຊະທູດ ແຫ່ງຣາຊະອານາຈັກໄທ ປະຈຳ ສປປ ລາວ ແລະ ປະຊາຊົນຊາວຂອນແກ່ນ ເຂົ້າຮ່ວມ.

ການທອດຖວາຍຜ້າປ່າສາມັກຄີລາວ - ໄທ ແມ່ນກິດຈະກຳ ຂອງສອງສະມາຄົມ ລາວ-ໄທ ແລະ ໄທ-ລາວ ເພື່ອມິດຕະພາບ ທີ່ເຄີຍປະຕິບັດຮ່ວມກັນມາ ແລະ ເປັນການສະເຫຼີມສະຫຼອງ ວັນສ້າງຕັ້ງສາຍພົວພັນການທູດລາວ-ໄທ ຄົບຮອບ 75 ປີ ແລະ ວັນສ້າງຕັ້ງສະມາຄົມລາວ - ໄທ, ໄທ - ລາວ ເພື່ອມິດຕະພາບ ຄົບຮອບ 32 ປີ, ເພື່ອສົ່ງເສີມ ແລະ ອະນຸລັກວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງ ປະຊາຊົນລາວ ແລະ ໄທ, ທັງເປັນການຊຸກຍູ້ໃຫ້ມີການໄປມາຫາສູ່ເຊິ່ງກັນ ແລະ ກັນ ລະຫວ່າງ ປະຊາຊົນລາວ ແລະ ໄທ ນັບມື້ນັບຫຼາຍຂຶ້ນ, ພ້ອມທັງເປັນການຈັດຕັ້ງຜັນຂະຫຍາຍການຮ່ວມມື ໃນຖານະເປັນຄູ່ຮ່ວມຍຸດທະສາດ ເພື່ອການຂະຫຍາຍຕົວ ແລະ ພັດທະນາແບບຍືນຍົງ ລາວ-ໄທ ກໍ່ຄື ການປະກອບສ່ວນອັນສຳຄັນ ເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມູນເຊື້ອອັນດີງາມ ລະຫວ່າງ ສອງປະເທດ ແລະ ປະຊາຊົນສອງຊາດລາວ ແລະ ໄທ, ໃຫ້ນັບມື້ນັບພັດທະນາສູ່ລະດັບໃໝ່. ການທອດຖວາຍຜ້າປ່າໃນຄັ້ງນີ້ ໄດ້ປະກອບສ່ວນປັດໃຈ ເຂົ້າໃນການກໍ່ສ້າງອາຄານໂຮງທຮຽນປະຣິຍັດຕິທຳ ຂອງວັດສີນວນ, ຈັງຫວັດຂອນແກ່ນ, ປະເທດໄທ ຈຳນວນ 1.507.420.000 ກີບ ຫຼື ເທົ່າກັບ 2.266.100 ບາດ.